ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 08 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 26 ພະຈິກ 2009

# ກົດໝາຍ
# ວ່າດ້ວຍ ການລົງທຶນຂອງລັດ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍວ່າດ້ວຍ ການລົງທຶນຂອງລັດ ກຳນົດຫຼັກການ, ລະບຽບການ ແລະມາດຕະການ ກ່ຽວກັບ ການສ້າງ, ການພິຈາລະນາຮັບຮອງ, ການຈັດຕັ້ງປະຕິບັດ, ການຄຸ້ມຄອງ ແລະ ການຕິດຕາມ, ກວດກາການລົງທຶນຂອງລັດ ເພື່ອຮັບປະກັນໃຫ້ແຜນການລົງທຶນ ສອດຄ່ອງກັບທິດທາງນະໂຍບາຍ ແລະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແນໃສ່ເຮັດໃຫ້ວຽກງານການລົງທຶນຂອງລັດ ມີປະສິດທິພາບ, ປະສິດທິຜົນສູງ, ມີຄວາມໂປ່ງໃສ, ຮັບປະກັນການດຸ່ນດ່ຽງຂອງເສດຖະກິດມະຫາພາກ, ປັບປຸງເສດຖະກິດຂອງລັດໃຫ້ເຂັ້ມແຂງ, ສາມາດສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ພາກສ່ວນເສດຖະກິດອື່ນເຂົ້າຮ່ວມໃນການພັດທະນາເສດຖະກິດແຫ່ງຊາດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະຍືນຍົງ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ປະກອບສ່ວນປັບປຸງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະຮັກສາສະພາບແວດລ້ອມ.

### ມາດຕາ 2. ການລົງທຶນຂອງລັດ

ການລົງທຶນຂອງລັດ ແມ່ນ ການນຳໃຊ້ງົບປະມານແຫ່ງລັດ ແລະຊັບພະຍາກອນທຳມະຊາດ, ຊັບສິນ ແລະ ລິຂະສິດຂອງລັດ ໂດຍຜ່ານງົບປະມານ ເຂົ້າໃສ່ການປະຕິບັດແຜນງານ, ໂຄງການລົງທຶນຂອງລັດ ທີ່ໄດ້ຖືກຮັບຮອງຈາກສະພາແຫ່ງຊາດ ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ປາກົດຜົນເປັນຈິງ.

ສຳລັບການນຳໃຊ້ຊັບພະຍາກອນທຳມະຊາດ, ຊັບສິນ ແລະລິຂະສິດຂອງລັດນັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໝາຍເຖິງ** ທິດທາງ, ຄາດໝາຍໃນການພັດທະນາເສດຖະກິດ-ສັງຄົມ ທີ່ລັດຖະບານສະເໜີຕໍ່ສະພາແຫ່ງຊາດຮັບຮອງເອົາ;
2. **ແຜນການລົງທຶນຂອງລັດ** ໝາຍເຖິງ ແຜນການ ນຳໃຊ້ ແລະຈັດສັນທຶນຮອນ ລວມທັງຊັບພະຍາກອນທຳມະຊາດເຂົ້າໃນການປະຕິບັດເປົ້າໝາຍ ທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
3. **ການຈັດສັນງົບປະມານການລົງທຶນຂອງລັດ ໝາຍເຖິງ** ການຈັດສັນທຶນຈາກງົບປະມານຂອງລັດ ໃຫ້ຂະແໜງການ, ທ້ອງຖິ່ນ ໂດຍອີງຕາມນະໂຍບາຍຂອງລັດ, ລັກສະນະ, ຈຸດພິເສດຂອງແຕ່ລະຂະແໜງການ ແລະທ້ອງຖິ່ນ ຕາມກຳນົດຫມາຍທີ່ກຳນົດໄວ້ບົນພື້ນຖານດັດຊະນີ ຫຼື ຕົວຊີ້ວັດ ທາງເສດຖະກິດ, ສັງຄົມ;
4. **ການລົງທຶນນອກແຜນ ໝາຍເຖິງ** ການລົງທຶນທີ່ບໍ່ນອນຢູ່ໃນແຜນການລົງທຶນຂອງລັດ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ;
5. **ການລົງທຶນເກີນແຜນ** ໝາຍເຖິງ ການລົງທຶນທີ່ມີມູນຄ່າເກີນມູນຄ່າລວມຂອງໂຄງການ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ;
6. **ສາທາລະນຸປະໂພກ ໝາຍເຖິງ** ພື້ນຖານໂຄງລ່າງທີ່ຮັບໃຊ້ສຳລັບສາທາລະນະ ເປັນຕົ້ນ ຕາໜ່າງໄຟຟ້າ, ນ້ຳປະປາ, ໄປສະນີ, ໂທລະຄົມມະນາຄົມ, ເຄຫະສະຖານ, ຫໍວັດທະນະທຳ, ສະໜາມກິລາ;
7. **ແຜນງານ ໝາຍເຖິງ** ອົງປະກອບຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍມີເປົ້າໝາຍບັນລຸສະເພາະ ຊຶ່ງລວມມີບັນດາໂຄງການທີ່ມີສ່ວນພົວພັນຊຶ່ງກັນ ແລະກັນ ແນໃສ່ຮັບໃຊ້ ຫຼື ບັນລຸເປົ້າໝາຍຂອງແຜນງານນັ້ນ;
8. **ໂຄງການ ໝາຍເຖິງ** ກິດຈະກຳຕ່າງໆທີ່ຕ້ອງປະຕິບັດ ແນໃສ່ເຮັດໃຫ້ວັດຖຸປະສົງຂອງໂຄງການນັ້ນ ບັນລຸຜົນ;
9. **ການກຳນົດໂຄງການ ໝາຍເຖິງ** ການກຳນົດແນວຄວາມຄິດທີ່ກໍ່ໃຫ້ເກີດມີໂຄງການ, ການຄັດເລືອກໂຄງການ ແລະການສຶກສາຄວາມເປັນໄປໄດ້ເບື້ອງຕົ້ນຂອງໂຄງການກ່ອນຈະຕັດສິນໃຈດຳເນີນການສຶກສາລາຍລະອຽດຂອງໂຄງການ;
10. **ການກະກຽມໂຄງການ ໝາຍເຖິງ** ການເກັບກຳ, ວິເຄາະວິໄຈ ແລະສຶກສາຂໍ້ມູນຢ່າງລະອຽດ ເພື່ອໃຫ້ໝັ້ນໃຈວ່າ ໂຄງການທີ່ກຳນົດນັ້ນເປັນໂຄງການທີ່ສາມາດປະຕິບັດໄດ້ ແລະໃຫ້ຜົນປະໂຫຍດຕອບແທນຢ່າງຄຸ້ມຄ່າ ຫຼື ບັນລຸຕາມວັດຖຸປະສົງ. ການກະກຽມໂຄງການ ມີສາມໜ້າວຽກຕົ້ນຕໍຄື ການກຳນົດໂຄງຮ່າງໂຄງການ, ການສຶກສາຄວາມເປັນໄປໄດ້ຂອງໂຄງການ ແລະ ການຂຽນບົດລາຍງານໂຄງການ ຫຼື ບົດວິພາກເສດຖະກິດ-ເຕັກນິກຂອງໂຄງການ;

11. **ການປະເມີນໂຄງການ ໝາຍເຖິງ** ການຕີລາຄາທາງດ້ານຄວາມສອດຄ່ອງ, ປະສິດທິຜົນ, ປະສິດທິພາບ, ຜົນກະທົບ ແລະຄວາມຍືນຍົງຂອງໂຄງການ ກ່ອນການພິຈາລະນາບັນຈຸໂຄງການ ເຂົ້າໃນແຜນການລົງທຶນຂອງລັດ;
12. **ການປະເມີນຜົນໂຄງການ ໝາຍເຖິງ** ການຕີລາຄາໝາກຜົນຂອງການປະຕິບັດໂຄງການ, ການທົບທວນຄືນຜົນການນຳໃຊ້ໂຄງການ ໂດຍພິຈາລະນາໃນດ້ານຄວາມສອດຄ່ອງ, ປະສິດທິຜົນ, ປະສິດທິພາບ, ຜົນກະທົບ ແລະຄວາມຍືນຍົງຂອງໂຄງການ ເພື່ອໃຫ້ຄຳແນະນຳໃນການປັບປຸງ ແລະຖອດຖອນບົດຮຽນ;
13. **ການຈັດຕັ້ງປະຕິບັດໂຄງການ ໝາຍເຖິງ** ການນຳເອົາໂຄງການໄປຈັດຕັ້ງປະຕິບັດຕົວຈິງ ພາຍຫລັງທີ່ໂຄງການໄດ້ບັນຈຸເຂົ້າແຜນການລົງທຶນ ແລະຜ່ານການຮັບຮອງຈາກສະພາແຫ່ງຊາດແລ້ວ;
14. **ການດຳເນີນງານໂຄງການ ໝາຍເຖິງ** ການປະຕິບັດກິດຈະກຳຕ່າງໆຂອງໂຄງການຕາມແຜນດຳເນີນງານຂອງໂຄງການ ນັບແຕ່ເວລາທີ່ໂຄງການໄດ້ຖືກຈັດຕັ້ງປະຕິບັດໄປຈົນຮອດການສຳເລັດ ແລະມອບ-ຮັບໂຄງການ;
15. **ການຕິດຕາມໂຄງການ ໝາຍເຖິງ** ການກວດກາການດຳເນີນງານໂຄງການ ເພື່ອໃຫ້ຮູ້ກ່ຽວກັບຄວາມຄືບໜ້າ ແລະບັນຫາຕ່າງໆ ທີ່ອາດຈະເກີດຂຶ້ນໃນການຈັດຕັ້ງປະຕິບັດໂຄງການ ເພື່ອມີວິທີການແກ້ໄຂໃຫ້ທັນເວລາ;
16. **ເຈົ້າຂອງໂຄງການ ໝາຍເຖິງ** ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ໄດ້ຮັບງົບປະມານການລົງທຶນຂອງລັດ;
17. **ຄະນະຮັບຜິດຊອບໂຄງການ ໝາຍເຖິງ** ຄະນະ ຫຼື ການຈັດຕັ້ງທີ່ຖືກແຕ່ງຕັ້ງຈາກເຈົ້າຂອງໂຄງການໃຫ້ຮັບຜິດຊອບໃນການບໍລິຫານ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ;
18. **ຜູ້ຄຸ້ມຄອງ ແລະນຳໃຊ້ໂຄງການ ໝາຍເຖິງ** ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບການມອບໝາຍຈາກເຈົ້າຂອງໂຄງການເພື່ອຄຸ້ມຄອງ, ນຳໃຊ້ ແລະບູລະນະຮັກສາໂຄງການລົງທຶນຂອງລັດ;
19. **ທີ່ປຶກສາໂຄງການ ໝາຍເຖິງ** ບຸກຄົນ ຫຼື ນິຕິບຸກຄົນທີ່ຖືກວ່າຈ້າງໂດຍເຈົ້າຂອງໂຄງການ ຫຼື ຄະນະຮັບຜິດຊອບໂຄງການ ເພື່ອໃຫ້ຄຳເຫັນ ຫຼື ຄຳແນະນຳທາງດ້ານເຕັກນິກວິຊາການລວມທັງ ດ້ານການບໍລິຫານ, ຄຸ້ມຄອງໃນການປະຕິບັດໂຄງການລົງທຶນຂອງລັດ;
20. **ຜູ້ຮັບເໝົາໂຄງການ ໝາຍເຖິງ** ນິຕິບຸກຄົນທີ່ຖືກວ່າຈ້າງ ຫຼື ມອບເໝົາໂດຍເຈົ້າຂອງໂຄງການ ຫຼື ຄະນະຮັບຜິດຊອບໂຄງການເພື່ອໃຫ້ປະຕິບັດໂຄງການລົງທຶນຂອງລັດ;
21. **ດອກເບ້ຍເງິນກູ້ສຳລັບໂຄງການກູ້ຢືມ ໝາຍເຖິງ** ດອກເບ້ຍເງິນກູ້ທີ່ລັດຖະບານໄດ້ກູ້ຢືມຈາກທະນາຄານພາຍໃນ ຫຼື ຕ່າງປະເທດ ເພື່ອຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ;
22. **ການອວ່າຍທຶນ** ໝາຍເຖິງ ການເຄື່ອນຍ້າຍທຶນຈາກໂຄງການໜຶ່ງໄປໃສ່ໂຄງການອື່ນ;
23. **ການປະມູນແບບຮູບການ ໝາຍເຖິງ** ການປະມູນທີ່ຂັດກັບລະບຽບການປະມູນ ເປັນຕົ້ນການສົມຮູ້ຮ່ວມຄິດໃນການປະມູນ ເຊັ່ນ ບໍລິສັດດຽວ ຊື້ເອົາໝົດຊອງປະມູນ ແຕ່ອອກຊື່ຫຼາຍບໍລິສັດ.

## ມາດຕາ 4. ນະໂຍບາຍກ່ຽວກັບການລົງທຶນຂອງລັດ

ລັດ ມີນະໂຍບາຍລົງທຶນເຂົ້າໃສ່ການ ກໍ່ສ້າງພື້ນຖານໂຄງລ່າງ, ວັດຖຸເຕັກນິກ, ພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ, ພັດທະນາຊັບພະຍາກອນມະນຸດ, ສົ່ງເສີມວິຊາການ ແລະວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢ່າງມີປະສິດທິພາບ, ປະສິດທິຜົນ, ປະຢັດ, ໂປ່ງໃສ ສາມາດກວດສອບໄດ້.

ລັດ ຊຸກຍູ້ສົ່ງເສີມບຸກຄົນ ແລະນິຕິບຸກຄົນທັງພາຍໃນ ແລະຕ່າງປະເທດ ປະກອບສ່ວນທຶນຮອນຂອງຕົນເຂົ້າຊ່ວຍແຜນງານ ຫຼື ໂຄງການລົງທຶນຂອງລັດ ຕາມລະບຽບການ ດ້ວຍການປະຕິບັດນະໂຍບາຍຕອບແທນຂອງລັດ ຢ່າງເຫມາະສົມ.

## ມາດຕາ 5. ຫຼັກການກ່ຽວກັບການລົງທຶນຂອງລັດ

ການລົງທຶນຂອງລັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຕ້ອງສອດຄ່ອງກັບ ທິດທາງນະໂຍບາຍ, ວິໄສທັດ, ຍຸດທະສາດ, ເປົ້າໝາຍຂອງແຜນພັດທະນາ ເສດຖະກິດ-ສັງຄົມ ແລະຄວາມສາມາດຕອບສະໜອງທາງດ້ານງົບປະມານ;
2. ຕ້ອງມີຈຸດສຸມ, ມີຄວາມຍຸຕິທຳ, ມີຄວາມສົມສ່ວນລະຫວ່າງເຂດແຄວັ້ນ ແລະຂົງເຂດວຽກງານ;
3. ຕ້ອງປະຕິບັດຕາມແຜນງານ, ໂຄງການ ທີ່ນອນໃນແຜນການລົງທຶນຂອງລັດ ແລະ ຖືເປັນບູລິມະສິດໂຄງການທີ່ມີຄວາມຈຳເປັນ ຊຶ່ງພາກສ່ວນເສດຖະກິດອື່ນບໍ່ລົງທຶນ ຫຼື ບໍ່ມີເງື່ອນໄຂ;
4. ຕ້ອງຄຸ້ມຄອງການລົງທຶນຂອງລັດຢ່າງເປັນເອກະພາບ, ມີການແບ່ງຂັ້ນຄຸ້ມຄອງຢ່າງຈະແຈ້ງ ແລະສອດຄ່ອງກັບລະບຽບກົດໝາຍ;
5. ຕ້ອງມີສ່ວນຮ່ວມຂອງປະຊາຊົນ;
6. ຕ້ອງໃຫ້ມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ໃນການຕິດຕາມ, ກວດກາ ແລະປະເມີນຜົນການລົງທຶນຂອງລັດ ເພື່ອຮັບປະກັນ ປະສິດທິພາບ, ປະສິດທິຜົນ, ປະຢັດ, ໂປ່ງໃສ ສາມາດກວດສອບໄດ້.

## ມາດຕາ 6. ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ ແລະພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບການລົງທຶນຂອງລັດ ເປັນຕົ້ນ ໃນການສ້າງ, ການອະນຸມັດ, ການຈັດຕັ້ງປະຕິບັດ ແລະການຄຸ້ມຄອງ ແຜນການ, ແຜນງານ ແລະໂຄງການລົງທຶນຂອງລັດ.

ກົດໝາຍສະບັບນີ້ ບໍ່ກວມເອົາການລົງທຶນຂອງລັດໃສ່ວິສາຫະກິດຂອງລັດ.

## ມາດຕາ 7. ການຮ່ວມມືສາກົນ

ລັດ ສົ່ງເສີມໃຫ້ມີການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະສາກົນກ່ຽວກັບວຽກງານການລົງທຶນຂອງລັດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ຍົກລະດັບຄວາມຮູ້, ຄວາມສາມາດ

ດ້ານວິຊາການ, ເຕັກໂນໂລຢີ ແລະລະດົມແຫຼ່ງທຶນເຂົ້າໃນການພັດທະນາ ເພື່ອຮັບປະກັນຜົນປະໂຫຍດສູງສຸດຂອງຊາດ.

# ພາກທີ II
# ການດໍາເນີນການລົງທຶນຂອງລັດ

## ໝວດທີ 1
## ປະເພດການລົງທຶນຂອງລັດ

### ມາດຕາ 8. ປະເພດການລົງທຶນຂອງລັດ

ການລົງທຶນຂອງລັດ ມີສອງປະເພດ ດັ່ງນີ້:

1. ລັດລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ;
2. ລັດລົງທຶນໃສ່ການສົ່ງເສີມວິຊາການ.

### ມາດຕາ 9. ການລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ

ການລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ ປະກອບດ້ວຍ ການກໍ່ສ້າງໃໝ່ ແລະການບູລະນະສ້ອມແປງໃຫຍ່ ເປັນຕົ້ນ ການສ້າງເສັ້ນທາງຄົມມະນາຄົມ, ສາທາລະນຸປະໂພກ, ຊົນລະປະທານ, ໂຮງຮຽນ, ໂຮງໝໍ ແລະບັນດາພື້ນຖານວັດຖຸເຕັກນິກ, ການສະໜອງວັດຖຸອຸປະກອນ, ກົນຈັກ, ພາຫະນະ ແລະຊັບສິນ.

### ມາດຕາ 10. ການລົງທຶນໃສ່ການສົ່ງເສີມວິຊາການ

ການລົງທຶນໃສ່ການສົ່ງເສີມວິຊາການ ປະກອບດ້ວຍການລົງທຶນເຂົ້າໃສ່ວຽກງານຕົ້ນຕໍ ດັ່ງນີ້: ການພັດທະນາຊັບພະຍາກອນມະນຸດ, ການຝຶກອົບຮົມ, ການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຢີ, ການສົ່ງເສີມການຜະລິດ, ການຊຸກຍູ້ແກ້ໄຂຄວາມທຸກຍາກ, ການເກັບກໍາຂໍ້ມູນ, ການສຶກສາຄວາມເປັນໄປໄດ້ຂອງໂຄງການ, ການສໍາຫລວດອອກແບບໂຄງການ, ການສ້າງແຜນແມ່ບົດພັດທະນາເສດຖະກິດ-ສັງຄົມ ແລະການສະໜອງວັດຖຸອຸປະກອນຮັບໃຊ້ທາງດ້ານວິຊາການ.

## ໝວດທີ 2
## ແຜນການ, ແຜນງານ ແລະໂຄງການ ລົງທຶນຂອງລັດ

### ມາດຕາ 11. ແຜນການລົງທຶນຂອງລັດ

ແຜນການລົງທຶນຂອງລັດ ມີ ດັ່ງນີ້:

1. ແຜນການລົງທຶນ 5 ປີ ຊຶ່ງໄດ້ສ້າງຂຶ້ນໃນລະດັບຊາດ, ຂະແໜງການ ແລະທ້ອງຖິ່ນ;

2. ແຜນການລົງທຶນປະຈຳປີ ຊຶ່ງໄດ້ສ້າງຂຶ້ນໃນລະດັບຊາດ, ຂະແໜງການ ແລະທ້ອງຖິ່ນ.

### ມາດຕາ 12. ໂຄງປະກອບແຜນການລົງທຶນຂອງລັດ

ແຜນການລົງທຶນຂອງລັດ ປະກອບດ້ວຍ:

1. ແຜນງານການລົງທຶນຂອງລັດ;
2. ໂຄງການລົງທຶນຂອງລັດ.

### ມາດຕາ 13. ແຜນງານການລົງທຶນຂອງລັດ

ແຜນງານການລົງທຶນຂອງລັດ ຜັນຂະຫຍາຍແຜນການລົງທຶນຂອງລັດໃຫ້ເປັນອັນລະອຽດ ຊຶ່ງປະກອບດ້ວຍບັນດາໂຄງການທີ່ມີສ່ວນພົວພັນຊຶ່ງກັນ ແລະກັນ ແນໃສ່ຮັບໃຊ້ ຫຼື ບັນລຸເປົ້າໝາຍຂອງແຜນງານນັ້ນ.

ແຜນງານ ມີຫຼາຍລະດັບທີ່ແຕກຕ່າງກັນ ເຊັ່ນ ແຜນງານລະດັບຊາດ, ແຜນງານຂອງຂະແໜງການ ແລະທ້ອງຖິ່ນ.

### ມາດຕາ 14. ໂຄງການລົງທຶນຂອງລັດ

ໂຄງການລົງທຶນຂອງລັດ ຜັນຂະຫຍາຍແຜນງານໃຫ້ເປັນອັນລະອຽດ ຊຶ່ງປະກອບດ້ວຍບັນດາກິດຈະກຳທີ່ມີສ່ວນພົວພັນຊຶ່ງກັນ ແລະກັນ ແນໃສ່ຮັບໃຊ້ ຫຼື ບັນລຸວັດຖຸປະສົງຂອງໂຄງການນັ້ນ ເພື່ອຫວັງຜົນຕອບແທນທີ່ສາມາດວິເຄາະ, ປະເມີນຜົນໄດ້ ໂດຍມີການກຳນົດເວລາເລີ່ມຕົ້ນ ແລະເວລາສິ້ນສຸດ.

### ມາດຕາ 15. ປະເພດໂຄງການລົງທຶນຂອງລັດ

ໂຄງການລົງທຶນຂອງລັດ ແບ່ງອອກເປັນສາມປະເພດ ດັ່ງນີ້ ;

1. ໂຄງການປະເພດ I ມີມູນຄ່າແຕ່ 50 ຕື້ກີບຂຶ້ນໄປ ແລະມີອາຍຸການກໍ່ສ້າງໂຄງການບໍ່ເກີນ 7 ປີ;
2. ໂຄງການປະເພດ II ມີມູນຄ່າຫລາຍກວ່າ 5 ຕື້ກີບ ແຕ່ບໍ່ເຖິງ 50 ຕື້ກີບ ແລະມີອາຍຸການກໍ່ສ້າງໂຄງການບໍ່ເກີນ 5 ປີ;
3. ໂຄງການປະເພດ III ມີມູນຄ່າແຕ່ 5 ຕື້ກີບລົງມາ ແລະມີອາຍຸການກໍ່ສ້າງໂຄງການບໍ່ເກີນ 3 ປີ.

### ມາດຕາ 16. ມູນຄ່າລວມຂອງໂຄງການລົງທຶນຂອງລັດ

ມູນຄ່າລວມຂອງໂຄງການລົງທຶນຂອງລັດ ປະກອບດ້ວຍ ຄ່າໃຊ້ຈ່າຍໃນການກະກຽມໂຄງການ, ການກະກຽມປະຕິບັດໂຄງການ, ການປະຕິບັດໂຄງການ ເຊັ່ນ ຄ່າວັດສະດຸ, ອຸປະກອນ ແລະຄ່າແຮງງານ, ຄ່າໃຊ້ຈ່າຍຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະທຳມະຊາດ, ຄ່າໃຊ້ຈ່າຍທົດລອງນຳໃຊ້, ຄ່າໃຊ້ຈ່າຍບໍລິຫານ ແລະຄຸ້ມຄອງໂຄງການ, ຄ່າທີ່ປຶກສາໂຄງການ, ດອກເບ້ຍເງິນກູ້ສຳລັບໂຄງການກູ້ຢືມ, ຄ່າໃຊ້ຈ່າຍສຸກເສີນ ແລະຄ່າອາກອນ.

## ມາດຕາ 17. ເອກະສານໂຄງການລົງທຶນຂອງລັດ

ໂຄງການລົງທຶນຂອງລັດ ທາງດ້ານການກໍ່ສ້າງພື້ນຖານໂຄງລ່າງ ປະກອບດ້ວຍເອກະສານຕົ້ນຕໍ ດັ່ງນີ້ :

1. ບົດສະເໜີໂຄງການ;
2. ບົດສຶກສາຄວາມເປັນໄປໄດ້ຂອງໂຄງການ;
3. ບົດລາຍງານການສຳຫຼວດ-ອອກແບບ;
4. ໃບໂອນສິດນຳໃຊ້ທີ່ດິນ ເພື່ອສາທາລະນະປະໂຫຍດ ໃນກໍລະນີທີ່ມີການນຳໃຊ້ທີ່ດິນຂອງປະຊາຊົນ.

ສຳລັບໂຄງການລົງທຶນຂອງລັດ ປະເພດ I ແລະ II ຕ້ອງປະກອບເອກະສານເພີ່ມຕື່ມອີກ ດັ່ງນີ້ :

1. ບົດພັດທະນາໂຄງການ ຫຼື ບົດວິພາກເສດຖະກິດ-ເຕັກນິກ;
2. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ.

ສຳລັບໂຄງການລົງທຶນຂອງລັດໃສ່ການສົ່ງເສີມວິຊາການ ປະກອບດ້ວຍເອກະສານຕົ້ນຕໍ ດັ່ງນີ້ :

1. ບົດສະເໜີໂຄງການ;
2. ບົດສຶກສາຄວາມເປັນໄປໄດ້ຂອງໂຄງການ.

## ມາດຕາ 18. ຂັ້ນຕອນກ່ຽວກັບການລົງທຶນຂອງລັດ

ຂັ້ນຕອນກ່ຽວກັບການລົງທຶນຂອງລັດ ມີ ດັ່ງນີ້:

1. ການສ້າງ ແລະຮັບຮອງເອົາແຜນການລົງທຶນຂອງລັດ;
2. ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ;
3. ການກວດກາ, ກວດການ ແລະລາຍງານການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ;
4. ການມອບຮັບ ແລະນຳໃຊ້ໂຄງການລົງທຶນຂອງລັດ.

# ໝວດທີ 3
# ການສ້າງ ແລະຮັບຮອງເອົາແຜນການລົງທຶນຂອງລັດ

## ມາດຕາ 19. ບ່ອນອີງໃນການສ້າງແຜນການລົງທຶນຂອງລັດ

ບ່ອນອີງໃນການສ້າງແຜນການລົງທຶນຂອງລັດ ມີ ດັ່ງນີ້:

1. ທິດທາງ, ແຜນຍຸດທະສາດພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຍຸດທະສາດພັດທະນາຂອງຂະແໜງການ, ທ້ອງຖິ່ນ ແລະເຂດແຄ້ວນ, ເຂດເສດຖະກິດຈຸດສຸມ;

2. ແຜນແມ່ບົດພັດທະນາພື້ນຖານໂຄງລ່າງເຕັກນິກ, ແຜນການນຳໃຊ້ທີ່ດິນ, ແຜນແມ່ບົດໃນການນຳໃຊ້ແຫລ່ງນ້ຳ, ຊັບພະຍາກອນປ່າໄມ້, ບໍ່ແຮ່ ແລະແຫລ່ງຊັບພະຍາກອນທຳມະຊາດອື່ນໆ;
3. ກຳນົດໝາຍການຈັດສັນທຶນຂອງລັດ;
4. ຜົນຂອງການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດໃນໄລຍະຜ່ານມາ;
5. ຄວາມສາມາດດຸນດ່ຽງແຫລ່ງທຶນ;
6. ທ່າແຮງບົ່ມຊ້ອນຂອງຂະແໜງການ, ທ້ອງຖິ່ນ ແລະເຂດແຄ້ວນ.

## ມາດຕາ 20. ບ່ອນອີງໃນການຈັດສັນງົບປະມານການລົງທຶນຂອງລັດ

ແຫຼ່ງທຶນສຳລັບການລົງທຶນຂອງລັດ ແມ່ນ ມາຈາກງົບປະມານແຫ່ງລັດ. ການຈັດສັນງົບປະມານການລົງທຶນຂອງລັດ ຕ້ອງຈັດສັນຕາມແຜນງານ, ໂຄງການ ບົນພື້ນຖານຍຸດທະສາດ ແລະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຮັບປະກັນໃຫ້ມີການສົມສ່ວນລະຫວ່າງຂົງເຂດຕ່າງໆ ເປັນຕົ້ນ ຂົງເຂດເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ບັນດາຂະແໜງການ, ລະຫວ່າງສູນກາງ ແລະທ້ອງຖິ່ນ.

ໃນການຈັດສັນງົບປະມານການລົງທຶນຂອງລັດ ບັນດາກະຊວງ, ອົງການ ຕ້ອງອີງໃສ່ ແຜນການ, ແຜນງານ, ໂຄງການ ແລະຄວາມຕ້ອງການຕົວຈິງ.

ການຈັດສັນງົບປະມານການລົງທຶນຂອງລັດໃຫ້ແກ່ອົງການປົກຄອງທ້ອງຖິ່ນ ແມ່ນ ອີງໃສ່ກຳນົດໝາຍທີ່ລັດຖະບານໄດ້ວາງອອກໃນແຕ່ລະໄລຍະ ດັ່ງນີ້ :

1. ແຜນຍຸດທະສາດການພັດທະນາ;
2. ລະດັບຄວາມທຸກຍາກ ແລະການພັດທະນາ;
3. ລະດັບລາຄາສິນຄ້າ;
4. ພັນທະໃນການປະກອບສ່ວນດ້ານລາຍຮັບງົບປະມານແຫ່ງລັດ;
5. ເນື້ອທີ່ທາງພູມສາດ;
6. ຈຳນວນປະຊາກອນ;
7. ຈຳນວນຫົວໜ່ວຍບໍລິຫານການປົກຄອງ.

## ມາດຕາ 21. ອົງການຮັບຜິດຊອບສ້າງແຜນການລົງທຶນຂອງລັດ

ອົງການຮັບຜິດຊອບສ້າງແຜນການລົງທຶນຂອງລັດ ມີ ດັ່ງນີ້:

1. ລັດຖະບານ;
2. ກະຊວງແຜນການ ແລະການລົງທຶນ;
3. ບັນດາກະຊວງ ແລະອົງການ;
4. ອົງການປົກຄອງແຂວງ, ນະຄອນ;
5. ອົງການປົກຄອງເມືອງ, ເທດສະບານ.

## ມາດຕາ 22. ລັດຖະບານ

ລັດຖະບານ ເປັນຜູ້ກຳນົດທິດທາງ, ຄາດໝາຍລວມໃນການສ້າງແຜນການລົງທຶນຂອງລັດ ບົນພື້ນຖານການຄົ້ນຄວ້າຂອງກະຊວງແຜນການ ແລະການລົງທຶນ ກ່ຽວກັບບັນດາປັດໄຈຕ່າງໆ ເປັນຕົ້ນແຫລ່ງທຶນ ແລະການດຸນດ່ຽງມະຫາພາກ.

## ມາດຕາ 23. ກະຊວງແຜນການ ແລະການລົງທຶນ

ກະຊວງແຜນການ ແລະການລົງທຶນ ຜັນຂະຫຍາຍທິດທາງ ແລະຄາດໝາຍລວມ ຂອງລັດຖະບານ ແລ້ວແນະນຳດ້ານວິຊາການກ່ຽວກັບການສ້າງແຜນການໃຫ້ຂະແໜງການ ແລະທ້ອງຖິ່ນ. ຈາກນັ້ນຈຶ່ງຄົ້ນຄວ້າ, ສັງລວມແຜນການຂອງຂະແໜງການ ແລະທ້ອງຖິ່ນ ເພື່ອສ້າງເປັນແຜນການລົງທຶນຂອງລັດໃນລະດັບຊາດ ເພື່ອນຳສະເໜີລັດຖະບານພິຈາລະນາ.

## ມາດຕາ 24. ບັນດາກະຊວງ, ອົງການ ແລະອົງການປົກຄອງທ້ອງຖິ່ນ

ພາຍຫຼັງທີ່ໄດ້ຮັບການແນະນຳຂອງກະຊວງແຜນການ ແລະການລົງທຶນ ກ່ຽວກັບການສ້າງແຜນການລົງທຶນຂອງລັດແລ້ວ ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຊີ້ນຳພາກສ່ວນຕ່າງໆທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ສ້າງແຜນການລົງທຶນຂອງລັດໃນຂັ້ນຂອງຕົນ ໂດຍມີການເຂົ້າຮ່ວມຂອງບັນດາກຳມາທິການຂອງສະພາແຫ່ງຊາດ ຫຼື ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລ້ວນຳສະເໜີແຜນການດັ່ງກ່າວ ຕໍ່ກະຊວງແຜນການ ແລະການລົງທຶນ ເພື່ອສັງລວມ.

## ມາດຕາ 25. ເງື່ອນໄຂພື້ນຖານໃນການພິຈາລະນາຮັບເອົາໂຄງການລົງທຶນຂອງລັດ

ໃນການພິຈາລະນາຮັບເອົາໂຄງການລົງທຶນເຂົ້າໃນແຜນການລົງທຶນຂອງລັດ ຕ້ອງປະຕິບັດຕາມເງື່ອນໄຂພື້ນຖານ ດັ່ງນີ້:

1. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ;
2. ມີປະສິດທິຜົນດ້ານເສດຖະກິດ-ສັງຄົມ ແລະຮັບປະກັນການປົກປັກຮັກສາສິ່ງແວດລ້ອມແບບຍືນຍົງ;
3. ມີເອກະສານປະກອບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງກົດໝາຍສະບັບນີ້;
4. ໄດ້ຮັບການເຫັນດີຈາກອົງການ ຫຼື ທ້ອງຖິ່ນ ທີ່ກ່ຽວຂ້ອງໃນການຕົກລົງໂຄງການລົງທຶນຂອງລັດ ໃນແຕ່ລະຂັ້ນ;
5. ໄດ້ຜ່ານການປະເມີນຕາມຫລັກວິຊາການ ຈາກອົງການປະເມີນຜົນໃນແຕ່ລະຂັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້;
6. ນອນໃນທິດທາງແຜນການລົງທຶນຂອງລັດ 5 ປີ.

ສຳລັບໂຄງການທີ່ນຳໃຊ້ທຶນກູ້ຢືມ ແລະຊ່ວຍເຫຼືອລ້າຈາກຕ່າງປະເທດ ຕ້ອງມີການຢັ້ງຢືນແຫຼ່ງທຶນກ່ອນ ຈຶ່ງສາມາດກຳນົດເອົາໂຄງການນັ້ນເຂົ້າໃນແຜນການລົງທຶນຂອງລັດ.

### ມາດຕາ 26. ການປະເມີນ ແລະອົງການປະເມີນໂຄງການລົງທຶນຂອງລັດ

ການປະເມີນໂຄງການລົງທຶນຂອງລັດ ຕ້ອງໃຫ້ຖືກຕ້ອງຕາມຫຼັກວິຊາການ ແລະນຳໃຊ້ເຄື່ອງມືການປະເມີນໂຄງການທີ່ກະຊວງແຜນການ ແລະການລົງທຶນ ວາງອອກ.

ອົງການປະເມີນໂຄງການລົງທຶນຂອງລັດ ປະກອບດ້ວຍ:

1. ກະຊວງແຜນການ ແລະການລົງທຶນ ປະເມີນໂຄງການປະເພດ I ແລະປະເພດ II;
2. ບັນດາກະຊວງ, ອົງການ, ພະແນກແຜນການ ແລະການລົງທຶນ ແຂວງ, ນະຄອນ ປະເມີນໂຄງການປະເພດ III.

### ມາດຕາ 27. ການຈັດລຽງບູລິມະສິດໂຄງການເຂົ້າໃນແຜນການລົງທຶນຂອງລັດ

ບັນດາກະຊວງ, ອົງການ ແລະອົງການປົກຄອງທ້ອງຖິ່ນ ທີ່ຈັດລຽງບູລິມະສິດໂຄງການ ເຂົ້າໃນແຜນການລົງທຶນຂອງລັດ ໃຫ້ປະຕິບັດ ດັ່ງນີ້:

1. ເປັນໂຄງການທີ່ເປັນບູລິມະສິດຂອງລັດຖະບານ, ຂະແໜງການ ແລະທ້ອງຖິ່ນ ເປັນຕົ້ນໂຄງການ ພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ, ສົ່ງເສີມການຜະລິດສິນຄ້າ ແລະເຂດຈຸດສຸມພັດທະນາ;
2. ເປັນໂຄງການທີ່ມີເປົ້າໝາຍສອດຄ່ອງກັບເປົ້າໝາຍຂອງຂົງເຂດ, ຂະແໜງການຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ;
3. ເປັນໂຄງການທີ່ມີຜົນຕອບແທນສູງທາງດ້ານເສດຖະກິດ-ສັງຄົມ ແລະ ຮັບປະກັນການພັດທະນາແບບຍືນຍົງ;
4. ເປັນໂຄງການທີ່ຕອບສະໜອງຄວາມຈຳເປັນ ແລະ ຮີບດ່ວນຂອງລັດຖະບານ, ຂະແໜງການ ແລະທ້ອງຖິ່ນ;
5. ເປັນໂຄງການຊ່ວຍເຫລືອທີ່ຮຽກຮ້ອງໃຫ້ມີທຶນສົມທົບຈາກງົບປະມານ.

### ມາດຕາ 28. ການຮັບຮອງເອົາແຜນການລົງທຶນຂອງລັດ

ສະພາແຫ່ງຊາດ ເປັນອົງການພິຈາລະນາຕົກລົງຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະແຜນການລົງທຶນຂອງລັດປະຈຳປີ ແລະຫ້າປີ ແລະພິຈາລະນາຕົກລົງໂຄງການລົງທຶນຂອງລັດທີ່ມີມູນຄ່າແຕ່ 500 ຕື້ກີບ ຂຶ້ນໄປ ຕາມການສະເໜີຂອງລັດຖະບານ. ເອກະສານແຜນການດັ່ງກ່າວຕ້ອງສົ່ງເຖິງສະພາແຫ່ງຊາດ ຢ່າງຊ້າ ສິບຫ້າວັນລັດຖະການ. ກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ.

ກະຊວງແຜນການ ແລະການລົງທຶນ ຄົ້ນຄວ້າ, ພິຈາລະນາ, ສັງລວມ ໂຄງການ, ແຜນງານ ເຂົ້າໃນແຜນການລົງທຶນຂອງລັດ ບົນພື້ນຖານການສະເໜີຂອງບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ແລ້ວນຳສະເໜີລັດຖະບານ ພາຍໃນເດືອນພຶດສະພາຂອງທຸກປີ.

ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າ, ພິຈາລະນາ, ຕົກລົງເອົາໂຄງການ, ແຜນງານ ເຂົ້າໃນແຜນການລົງທຶນຂອງລັດໃນຂັ້ນຂອງຕົນ ແລ້ວນຳສະເໜີກະຊວງແຜນການ ແລະການລົງທຶນ ກ່ອນວັນທີ 15 ມີນາຂອງທຸກປີ.

# ໝວດທີ 4
# ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ

## ມາດຕາ 29. ອົງການຮັບຜິດຊອບກ່ຽວກັບການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ

ອົງການຮັບຜິດຊອບກ່ຽວກັບການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ມີ ດັ່ງນີ້:

1. ລັດຖະບານ;
2. ກະຊວງແຜນການ ແລະການລົງທຶນ;
3. ກະຊວງການເງິນ;
4. ບັນດາກະຊວງ ແລະອົງການ;
5. ອົງການປົກຄອງທ້ອງຖິ່ນ.

## ມາດຕາ 30. ລັດຖະບານ

ລັດຖະບານ ເປັນຜູ້ອອກດຳລັດວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະແຜນການລົງທຶນຂອງລັດ ພາຍໃນສາມສິບວັນ ພາຍຫຼັງທີ່ມີມະຕິຕົກລົງຂອງສະພາແຫ່ງຊາດ.

## ມາດຕາ 31. ກະຊວງແຜນການ ແລະການລົງທຶນ

ກະຊວງແຜນການ ແລະການລົງທຶນ ອອກບົດແນະນຳລະອຽດກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນຂອງລັດ ພາຍໃນສາມສິບວັນ ພາຍຫລັງທີ່ລັດຖະບານ ໄດ້ອອກດຳລັດວ່າດ້ວຍການຈັດຕັ້ງປະຕິບັດແຜນການດັ່ງກ່າວ.

## ມາດຕາ 32. ກະຊວງການເງິນ

ກະຊວງການເງິນ ເປັນຜູ້ຄຸ້ມຄອງ, ຕິດຕາມການສະໜອງ ແລະການນຳໃຊ້ງົບປະມານຂອງລັດ ເພື່ອຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດ ຂອງບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ.

## ມາດຕາ 33. ບັນດາກະຊວງ ແລະອົງການ

ບັນດາກະຊວງ ແລະອົງການ ມີຄວາມຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ໃນຂັ້ນຂອງຕົນໃຫ້ຖືກຕ້ອງ ຕາມລະບຽບກົດໝາຍ ແລະມີປະສິດທິຜົນ.

ໃນກໍລະນີທີ່ ບັນດາກະຊວງ ແລະອົງການ ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຢູ່ທ້ອງຖິ່ນໃດ ຕ້ອງມີການປະສານສົມທົບວຽກງານກັບທ້ອງຖິ່ນນັ້ນ.

ໃນກໍລະນີທີ່ ບັນດາກະຊວງ ແລະ ອົງການ ຈະມອບໂຄງການໃຫ້ທ້ອງຖິ່ນປະຕິບັດນັ້ນ ກໍໃຫ້ມອບແຕ່ຫົວທີ ໂດຍເລີ່ມແຕ່ຂັ້ນຕອນການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດ ຕາ 36 ຂອງກົດໝາຍສະບັບນີ້.

## ມາດຕາ 34. ອົງການປົກຄອງທ້ອງຖິ່ນ

ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດໃນຂັ້ນຂອງຕົນ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະມີປະສິດທິຜົນ.

ໃນກໍລະນີທີ່ ບັນດາກະຊວງ ແລະອົງການ ໄດ້ມອບໂຄງການລົງທຶນຂອງລັດໃຫ້ທ້ອງຖິ່ນຈັດຕັ້ງປະຕິບັດນັ້ນ ກໍໃຫ້ທ້ອງຖິ່ນປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

ໃນກໍລະນີທີ່ ມີລາຍຮັບເກີນແຜນໃນພູດລາຍຮັບຂອງແຂວງ, ນະຄອນ ກໍສາມາດນໍາໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ແຕ່ຕ້ອງປະຕິບັດໃຫ້ຖືກຕ້ອງຕາມມາດຕາ 25 ແລະມາດຕາ 35 ຂອງກົດໝາຍສະບັບນີ້ ແລະໃຫ້ມີການກວດການຢ່າງເຂັ້ມງວດ;

ໃນກໍລະນີ ລາຍຮັບທີ່ເປັນພູດຂອງທ້ອງຖິ່ນເກັບບໍ່ໄດ້ຕາມແຜນປະຈໍາສົກປີ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

## ມາດຕາ 35. ຂັ້ນຕອນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ

ໂຄງການລົງທຶນຂອງລັດ ໃຫ້ຈັດຕັ້ງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ;
2. ຈັດຕັ້ງປະມູນໂຄງການລົງທຶນຂອງລັດ;
3. ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ.

## ມາດຕາ 36. ການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ

ພາຍຫຼັງທີ່ລັດຖະບານໄດ້ຕົກລົງມອບໂຄງການລົງທຶນຂອງລັດໃຫ້ແລ້ວ ເຈົ້າຂອງໂຄງການ ຕ້ອງແຕ່ງຕັ້ງຄະນະຮັບຜິດຊອບໂຄງການ ເພື່ອດໍາເນີນການຄຸ້ມຄອງໂຄງການໃຫ້ສອດຄ່ອງກັບເປົ້າໝາຍ, ແຜນດໍາເນີນງານ ແລະທັນກັບກໍານົດເວລາ.

## ມາດຕາ 37. ການຈັດຕັ້ງປະມູນໂຄງການລົງທຶນຂອງລັດ

ທຸກໂຄງການລົງທຶນຂອງລັດ ຕາມຫລັກການ ຕ້ອງມີການປະມູນ. ການຈັດຕັ້ງປະມູນ ຕ້ອງປະຕິບັດຕາມລະບຽບການຢ່າງເຂັ້ມງວດ ແລະຮັບປະກັນການເປີດກວ້າງ, ໃຫ້ມີຄວາມໂປ່ງໃສ ສາມາດກວດສອບໄດ້, ມີຄວາມສະເໝີພາບ ແລະຍຸຕິທໍາ. ສໍາລັບໂຄງການປະເພດ I ແລະປະເພດ II ໃຫ້ດໍາເນີນຢ່າງເປີດເຜີຍໂດຍຜ່ານສື່ມວນຊົນ.

ການປະມູນໂຄງການລົງທຶນຂອງລັດ ຕ້ອງມີຜູ້ຕາງໜ້າຈາກຂະແໜງການການເງິນ, ຂະແໜງການແຜນການ ແລະການລົງທຶນ ແລະ ຂະແໜງການອື່ນ ຫຼື ທ້ອງຖິ່ນ ທີ່ກ່ຽວຂ້ອງເຂົ້າຮ່ວມນໍາ.

ເຈົ້າຂອງໂຄງການ ເປັນຜູ້ຄົ້ນຄວ້າຕົກລົງສະຖານທີ່ຈັດຕັ້ງການປະມູນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ການປະມູນທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ເປັນຕົ້ນ ການປະມູນແບບຮູບການ ແມ່ນ ເປັນໂມຄະ.

ສຳລັບລາຍລະອຽດຂອງການຈັດຕັ້ງປະມູນ ໄດ້ກຳນົດໄວ້ໃນລະບຽບການ ທີ່ກະຊວງການເງິນວາງອອກ.

## ມາດຕາ 38. ການຈັດຕັ້ງປະຕິບັດໂຄງການທີ່ມີການປະກອບສ່ວນທຶນຂອງປະຊາຊົນ

ການຈັດຕັ້ງປະຕິບັດໂຄງການທີ່ມີການປະກອບສ່ວນທຶນຂອງປະຊາຊົນ ຫຼື ພາກສ່ວນເສດຖະກິດອື່ນ ຊຶ່ງໃນນັ້ນມີທຶນຂອງລັດກວມເອົາແຕ່ 30% (ສາມສິບສ່ວນຮ້ອຍ) ຂອງທຶນທັງຫມົດຂຶ້ນໄປ ແມ່ນຕ້ອງປະຕິບັດຕາມກົດຫມາຍສະບັບນີ້. ໃນກໍລະນີ ທຶນຂອງລັດຖະບານກວມເອົາຕ່ຳກວ່າ 30% (ສາມສິບສ່ວນຮ້ອຍ) ຂອງທຶນທັງໝົດ ໃຫ້ປະຕິບັດຕາມການຕົກລົງຂອງເຈົ້າຂອງໂຄງການ.

## ມາດຕາ 39. ການຈັດຕັ້ງປະຕິບັດໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອລ້າ ແລະທຶນກູ້ຢືມ

ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ນຳໃຊ້ທຶນຊ່ວຍເຫຼືອລ້າ ຫຼື ທຶນກູ້ຢືມຈາກຕ່າງປະເທດ ໃຫ້ປະຕິບັດຕາມກົດໝາຍສະບັບນີ້ ຫຼື ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຫຼື ປະຕິບັດຕາມສັນຍາຊ່ວຍເຫຼືອລ້າ ຫຼື ກູ້ຢືມ ລະຫວ່າງລັດຖະບານກັບຜູ້ໃຫ້ທຶນ.

## ມາດຕາ 40. ການຕິດຕາມ, ກວດກາ, ກວດການ ແລະປະເມີນຜົນໂຄງການລົງທຶນຂອງລັດ

ພາຍຫຼັງທີ່ໄດ້ປະຕິບັດໂຄງການລົງທຶນຂອງລັດມາໃນໄລຍະໃດໜຶ່ງແລ້ວ ຕ້ອງປະຕິບັດ ດັ່ງນີ້:

1. ຕິດຕາມ, ກວດກາ, ກວດການ ການຈັດຕັ້ງປະຕິບັດໂຄງການ ເປັນປົກກະຕິ;
2. ດຳເນີນການປະເມີນຜົນເປັນແຕ່ລະໄລຍະ ເປັນຕົ້ນ ປະເມີນຜົນໃນເວລາຈັດຕັ້ງປະຕິບັດໂຄງການ.

ເນື້ອໃນການກວດກາ, ກວດການ ແລະປະເມີນຜົນຕົ້ນຕໍ ມີ ດັ່ງນີ້:

1. ຄວາມສອດຄ່ອງກັບແຜນພັດທະນາໂຄງການ ແລະຜູ້ທີ່ໄດ້ຮັບຜົນປະໂຫຍດ;
2. ປະສິດທິພາບຂອງການນຳໃຊ້ງົບປະມານ ແລະຄວາມຄືບໜ້າໃນການປະຕິບັດໂຄງການ;
3. ປະສິດທິຜົນໄດ້ບັນລຸຕາມຈຸດປະສົງ, ເປົ້າໝາຍຂອງໂຄງການ;
4. ຜົນກະທົບທາງດ້ານເສດຖະກິດ, ສັງຄົມ ແລະສິ່ງແວດລ້ອມ;
5. ໝາກຜົນຂອງໂຄງການ ໄດ້ຮັບການນຳໃຊ້ຢ່າງຖືກຕ້ອງກັບເປົ້າໝາຍຂອງໂຄງການ ແລະປະກອບສ່ວນນຳເອົາຜົນປະໂຫຍດມາສູ່ສັງຄົມ.

ໃນການກວດກາ, ກວດການ ແລະ ປະເມີນຜົນ ຖ້າຫາກພົບເຫັນບັນຫາໃດນຶ່ງ ຕ້ອງມີມາດຕະການ ແລະວິທີການ ແກ້ໄຂໃຫ້ທັນການ.

## ມາດຕາ 41. ການດັດແກ້ໂຄງການລົງທຶນຂອງລັດ

ໃນການດັດແກ້ໂຄງການລົງທຶນຂອງລັດ ໃຫ້ປະຕິບັດ ດັ່ງນີ້:

1. ອົງການທີ່ມີສິດໃນການດັດແກ້ໂຄງການລົງທຶນຂອງລັດ ມີ ດັ່ງນີ້:
   - ສະພາແຫ່ງຊາດ ພິຈາລະນາດັດແກ້ໃນມູນຄ່າຂອງການດັດແກ້ຫຼາຍກວ່າ 50 ຕື້ກີບຂຶ້ນໄປ ຕາມການສະເໜີຂອງລັດຖະບານ;

- ລັດຖະບານ ພິຈາລະນາດັດແກ້ໃນມູນຄ່າຂອງການດັດແກ້ແຕ່ 5 ຕື້ກີບ ຫາ 50 ຕື້ກີບ ຕາມການສະເໜີຂອງກະຊວງແຜນການ ແລະການລົງທຶນ;
- ກະຊວງແຜນການ ແລະການລົງທຶນ ພິຈາລະນາດັດແກ້ໃນມູນຄ່າຂອງການດັດແກ້ຕໍ່າກວ່າ 5 ຕື້ກີບ ລົງມາ ຕາມການສະເໜີຂອງບັນດາກະຊວງ, ອົງການ ແລະອົງການປົກຄອງທ້ອງຖິ່ນ.

2. ໂຄງການລົງທຶນຂອງລັດທີ່ສາມາດດັດແກ້ໄດ້ ຕ້ອງມີສາເຫດ ດັ່ງນີ້:
   - ເນື່ອງຈາກມີ ໄພທຳມະຊາດທີ່ຮ້າຍແຮງ ຫຼື ເຫດບັງເອີນທີ່ບໍ່ສາມາດຄວບຄຸມໄດ້;
   - ຍ້ອນມີ ການປ່ຽນແປງນະໂຍບາຍ, ແຜນແມ່ບົດ ຫຼື ຄວາມຈຳເປັນ ທີ່ສົ່ງຜົນສະທ້ອນໂດຍກົງຕໍ່ປະສິດທິຜົນຂອງໂຄງການ;
   - ຍ້ອນມີ ການປ່ຽນແປງເປົ້າໝາຍ ແລະການນຳໃຊ້ງົບປະມານຂອງໂຄງການລົງທຶນຂອງລັດ ທີ່ມີປະສິດທິຜົນກວ່າ;
3. ໂຄງການລົງທຶນຂອງລັດທີ່ມີຫຼາຍກິດຈະການ ອາດຈະດັດແກ້ເປັນແຕ່ລະກິດຈະການຍ່ອຍ ແລະໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ແລະ 2 ເທິງນີ້.

ກະຊວງແຜນການ ແລະ ການລົງທຶນ ສັງລວມບັນດາໂຄງການລົງທຶນທີ່ໄດ້ດັດແກ້ ແລ້ວສະເໜີລັດຖະບານ ເພື່ອລາຍງານໃຫ້ສະພາແຫ່ງຊາດ.

### ມາດຕາ 42. ການໂຈະໂຄງການລົງທຶນຂອງລັດ

ໃນການໂຈະໂຄງການລົງທຶນຂອງລັດ ໃຫ້ປະຕິບັດ ດັ່ງນີ້:

1. ອົງການທີ່ມີສິດໃນການໂຈະໂຄງການລົງທຶນຂອງລັດ ມີ ດັ່ງນີ້:
   - ສະພາແຫ່ງຊາດ ພິຈາລະນາການໂຈະໂຄງການລົງທຶນຂອງລັດ ທີ່ມີມູນຄ່າແຕ່ 500 ຕື້ກີບຂຶ້ນໄປ ຕາມການສະເໜີຂອງລັດຖະບານ;
   - ລັດຖະບານ ພິຈາລະນາການໂຈະໂຄງການປະເພດ I ຕາມການສະເໜີຂອງກະຊວງແຜນການ ແລະການລົງທຶນ;
   - ກະຊວງແຜນການ ແລະການລົງທຶນ ພິຈາລະນາການໂຈະໂຄງການ ປະເພດ II ແລະ III ຕາມການສະເໜີຂອງບັນດາກະຊວງ, ອົງການ ແລະອົງການປົກຄອງທ້ອງຖິ່ນ.
2. ໂຄງການລົງທຶນຂອງລັດ ຈະຖືກໂຈະເມື່ອມີສາເຫດຕົ້ນຕໍ ດັ່ງນີ້:
   - ບໍ່ມີປະສິດທິຜົນ;
   - ມີການປ່ຽນແປງນະໂຍບາຍ ຫຼື ແຜນແມ່ບົດ;
   - ຂັດກັບແຜນພັດທະນາໂຄງການ;
   - ສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ສະພາບແວດລ້ອມ ສັງຄົມ ແລະທຳມະຊາດ;
   - ແຕະຕ້ອງປູສະນີຍະສະຖານ ແລະວັດຖຸບູຮານ.

## ມາດຕາ 43. ການອ່ວາຍທຶນໂຄງການລົງທຶນຂອງລັດ

ການອ່ວາຍທຶນໂຄງການລົງທຶນຂອງລັດ ໃຫ້ປະຕິບັດ ດັ່ງນີ້:

1. ອົງການທີ່ມີສິດໃນການອ່ວາຍທຶນໂຄງການລົງທຶນຂອງລັດ ມີ:
   - ສະພາແຫ່ງຊາດ ພິຈາລະນາອ່ວາຍທຶນໂຄງການລົງທຶນຂອງລັດ ໃນມູນຄ່າອ່ວາຍທຶນ ຫລາຍກວ່າ 50 ຕື້ກີບ ຂຶ້ນໄປ ຕາມການສະເໜີຂອງລັດຖະບານ;
   - ລັດຖະບານ ພິຈາລະນາອ່ວາຍທຶນໂຄງການລົງທຶນຂອງລັດ ໃນມູນຄ່າອ່ວາຍທຶນ ແຕ່ 5 ຕື້ກີບ ຫາ 50 ຕື້ກີບ ຕາມການສະເໜີຂອງກະຊວງແຜນການ ແລະການລົງທຶນ;
   - ກະຊວງແຜນການ ແລະການລົງທຶນ ພິຈາລະນາອ່ວາຍທຶນໂຄງການລົງທຶນຂອງລັດ ໃນມູນຄ່າອ່ວາຍທຶນຕ່ຳກວ່າ 5 ຕື້ກີບ ຕາມການສະເໜີຂອງ ບັນດາກະຊວງ, ອົງ ການ ແລະອົງການປົກຄອງທ້ອງຖິ່ນ.
2. ການອ່ວາຍທຶນໂຄງການລົງທຶນຂອງລັດ ສາມາດປະຕິບັດໄດ້ໃນກໍລະນີ ດັ່ງນີ້:
   - ເປັນໂຄງການທີ່ນອນໃນແຜນການລົງທຶນຂອງລັດຂອງສົກປີນັ້ນ;
   - ເປັນໂຄງການທີ່ມີການຈັດຕັ້ງປະຕິບັດສຳເລັດແລ້ວ ແຕ່ງົບປະມານຍັງເຫລືອສ່ວນໃດ ສ່ວນໜຶ່ງ;
   - ເປັນໂຄງການທີ່ມີການຢັ້ງຢືນແຫຼ່ງທຶນຊຳລະຈາກບຸກຄົນ ຫຼື ນິຕິບຸກຄົນ ໄດ້ປະກອບສ່ວນ ພາຍຫຼັງທີ່ໂຄງການໄດ້ຮັບອະນຸມັດແລ້ວ;
   - ເປັນໂຄງການທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດຢ່າງຮ້າຍແຮງ.

## ມາດຕາ 44. ການຍົກເລີກໂຄງການລົງທຶນຂອງລັດ

ການຍົກເລີກໂຄງການລົງທຶນຂອງລັດ ໃຫ້ປະຕິບັດ ດັ່ງນີ້:

1. ອົງການທີ່ມີສິດໃນການຍົກເລີກໂຄງການລົງທຶນຂອງລັດ ມີ :
   - ສະພາແຫ່ງຊາດ ພິຈາລະນາຍົກເລີກໂຄງການທີ່ມີມູນຄ່າ 500 ຕື້ກີບ ຂຶ້ນໄປ ຕາມການ ສະເໜີຂອງລັດຖະບານ;
   - ລັດຖະບານ ພິຈາລະນາຍົກເລີກໂຄງການປະເພດ I ແລະປະເພດ II ຕາມການສະເໜີ ຂອງກະຊວງແຜນການ ແລະການລົງທຶນ;
   - ກະຊວງແຜນການ ແລະການລົງທຶນ ພິຈາລະນາຍົກເລີກໂຄງການປະເພດ III ຕາມ ການສະເໜີຂອງບັນດາກະຊວງ, ອົງການ ແລະອົງການປົກຄອງທ້ອງຖິ່ນ.
2. ໂຄງການລົງທຶນຂອງລັດ ຈະຖືກຍົກເລີກໃນກໍລະນີ ດັ່ງນີ້:
   - ມີຄວາມຈຳເປັນທີ່ຕ້ອງປົກປ້ອງຜົນປະໂຫຍດລວມຂອງລັດ, ລວມໝູ່ ແລະປະຊາຊົນ ທີ່ ຖືກກະທົບຈາກໂຄງການ;
   - ບໍ່ມີປະສິດທິຜົນ;
   - ມີເຫດສຸດວິໄສ ເຮັດໃຫ້ໂຄງການບໍ່ສາມາດດຳເນີນຕໍ່ໄປໄດ້;
   - ລະເມີດແຜນແມ່ບົດ;
   - ທຳລາຍສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດຢ່າງຮ້າຍແຮງ,

– ດຳເນີນບໍ່ຖືກຕາມມາດຕະຖານເຕັກນິກ ແລະລະບຽບການດ້ານຄວາມປອດໄພ.

ກະຊວງແຜນການ ແລະການລົງທຶນ ສັງລວມບັນດາໂຄງການທີ່ຖືກຍົກເລີກ ແລ້ວສະເໜີຕໍ່ລັດຖະບານ ເພື່ອລາຍງານຕໍ່ສະພາແຫ່ງຊາດ.

## ໝວດທີ 5
## ສິດ ແລະໜ້າທີ່ຂອງຜູ້ປະຕິບັດໂຄງການລົງທຶນຂອງລັດ

### ມາດຕາ 45. ຜູ້ປະຕິບັດໂຄງການລົງທຶນຂອງລັດ

ຜູ້ປະຕິບັດໂຄງການລົງທຶນຂອງລັດ ມີ ດັ່ງນີ້:

1. ເຈົ້າຂອງໂຄງການ;
2. ຄະນະຮັບຜິດຊອບໂຄງການ;
3. ຜູ້ຄຸ້ມຄອງ ແລະນຳໃຊ້ໂຄງການ;
4. ທີ່ປຶກສາໂຄງການ;
5. ຜູ້ຮັບເໝົາໂຄງການ.

### ມາດຕາ 46. ສິດ ແລະ ໜ້າທີ່ຂອງເຈົ້າຂອງໂຄງການ

ເຈົ້າຂອງໂຄງການ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຕົກລົງກະກຽມໂຄງການລົງທຶນຂອງລັດ;
2. ແຕ່ງຕັ້ງຄະນະຮັບຜິດຊອບໂຄງການ;
3. ຮັບຮອງການປະເມີນ, ປະເມີນຜົນ ບັນດາໂຄງການລົງທຶນຂອງລັດ ທີ່ຂຶ້ນກັບຂອບເຂດສິດຂອງຕົນ;
4. ຮັບຮອງແຜນການປະມູນ, ເອກະສານການປະມູນ, ຜົນຂອງການປະມູນ;
5. ຊີ້ນຳຄະນະຮັບຜິດຊອບໂຄງການ ປະຕິບັດໂຄງການລົງທຶນຂອງລັດ ໄປຕາມແຜນດຳເນີນງານ, ຮັບປະກັນຄຸນນະພາບ ແລະລາຍຈ່າຍການລົງທຶນ ຕາມທີ່ໄດ້ຮັບຮອງ;
6. ນຳສະເໜີກ່ຽວກັບການດັດແກ້, ໂຈະ, ອວ່າຍທຶນ ແລະ ຍົກເລີກໂຄງການລົງທຶນຂອງລັດ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 41, 42, 43 ແລະ 44 ຂອງກົດໝາຍສະບັບນີ້;
7. ຈັດຕັ້ງການຕິດຕາມ, ກວດກາການເຄື່ອນໄຫວຂອງຄະນະຮັບຜິດຊອບໂຄງການ ໃນໄລຍະການປະຕິບັດໂຄງການລົງທຶນຂອງລັດ;
8. ຊຳລະມູນຄ່າໂຄງການທີ່ໄດ້ເຮັດສຳເລັດໃຫ້ແກ່ຜູ້ຮັບເໝົາ;
9. ຍົກເລີກສັນຍາກັບຜູ້ຮັບເໝົາ ໃນກໍລະນີທີ່ຜູ້ຮັບເໝົາບໍ່ປະຕິບັດຕາມສັນຍາ;
10. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ມາດຕາ 47. ສິດ ແລະໜ້າທີ່ຂອງຄະນະຮັບຜິດຊອບໂຄງການ

ຄະນະຮັບຜິດຊອບໂຄງການ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳໃຊ້ແຫລ່ງທຶນຕ່າງໆທີ່ຖືກຕ້ອງຕາມກົດໝາຍ ເພື່ອຈັດຕັ້ງປະຕິບັດໂຄງການ ໂດຍໄດ້ຮັບການເຫັນດີຈາກເຈົ້າຂອງໂຄງການ;
2. ປະສານສົມທົບກັບອົງການຈັດຕັ້ງຕ່າງໆຂອງລັດ ແລະສະໜອງບັນດາຂໍ້ມູນທີ່ກ່ຽວຂ້ອງ ໃຫ້ທີ່ປຶກສາ, ຜູ້ຮັບເໝົາ, ຜູ້ຄຸ້ມຄອງ ແລະນຳໃຊ້ໂຄງການ;
3. ເລືອກເຟັ້ນທີ່ປຶກສາ, ຈັດຕັ້ງປະມູນໂຄງການ, ເຈລະຈາ ແລະເຮັດສັນຍາກັບທີ່ປຶກສາ ແລະຜູ້ຮັບເໝົາ ແລະຈັດຕັ້ງປະເມີນຜົນ ໂຄງການ;
4. ຕິດຕາມ, ກວດກາ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນ ໃນຂະບວນການປະຕິບັດໂຄງການລົງທຶນຂອງລັດ;
5. ລາຍງານສະພາບການປະຕິບັດໂຄງການແຕ່ລະໄລຍະ ໃຫ້ເຈົ້າຂອງໂຄງການ ຢ່າງເປັນປະຈຳ ພ້ອມທັງສະເໜີບັນດາກົນໄກ, ມາດຕະການ ແລະ ວິທີການ ເພື່ອຮັບປະກັນການປະຕິບັດໂຄງການ ຕາມກຳນົດເວລາ, ມີຄຸນນະພາບ ແລະປະຢັດລາຍຈ່າຍງົບປະມານການລົງທຶນ ທີ່ໄດ້ຮັບຮອງເອົາ;
6. ສະເໜີຍົກເລີກສັນຍາກັບທີ່ປຶກສາ ຫຼື ຜູ້ຮັບເໝົາໂຄງການ ໃນກໍລະນີທີ່ປຶກສາ ຫຼື ຜູ້ຮັບເໝົາລະເມີດສັນຍາ ຊຶ່ງໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ຜົນປະໂຫຍດລວມຂອງຊາດ;
7. ສະເໜີປ່ຽນຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງການ ໃນກໍລະນີທີ່ບໍ່ສາມາດເຮັດໜ້າທີ່ຕາມການມອບໝາຍ;
8. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ມາດຕາ 48. ສິດ ແລະໜ້າທີ່ຂອງຜູ້ຄຸ້ມຄອງ ແລະນຳໃຊ້ໂຄງການ

ຜູ້ຄຸ້ມຄອງ ແລະນຳໃຊ້ໂຄງການ ມີສິດ ແລະ ໜ້າທີ່ໃນການບໍລິຫານ, ຄຸ້ມຄອງ ແລະນຳໃຊ້ໝາກຜົນຂອງໂຄງການລົງທຶນຂອງລັດ ຕາມການມອບໝາຍຂອງເຈົ້າຂອງໂຄງການ.

## ມາດຕາ 49. ສິດ ແລະໜ້າທີ່ຂອງທີ່ປຶກສາໂຄງການ

ທີ່ປຶກສາໂຄງການ ມີສິດ ແລະໜ້າທີ່ ດັ່ງນີ້:

1. ສະເໜີຄະນະຮັບຜິດຊອບໂຄງການ ສະໜອງຂໍ້ມູນ, ເອກະສານ, ລະບຽບການຕ່າງໆທີ່ກ່ຽວຂ້ອງກັບໜ້າທີ່ ທີ່ໄດ້ຮັບມອບໝາຍ;
2. ປະຕິເສດວຽກງານທີ່ບໍ່ໄດ້ກຳນົດໄວ້ໃນສັນຍາ ຫຼື ຂັດກັບລະບຽບກົດໝາຍ;
3. ໃຫ້ຄຳແນະນຳທາງດ້ານວິຊາການ, ເຕັກນິກ ກ່ຽວກັບໂຄງການທີ່ຕົນຮັບຜິດຊອບ;
4. ຕິດຕາມ, ກວດກາ ການປະຕິບັດໂຄງການ ຢ່າງເປັນປະຈຳ;
5. ລາຍງານຜົນຂອງການປະຕິບັດໂຄງການ ໃຫ້ຄະນະຮັບຜິດຊອບໂຄງການ ຢ່າງເປັນປົກກະຕິ;
6. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 50. ສິດ ແລະໜ້າທີ່ຂອງຜູ້ຮັບເໝົາໂຄງການ

ຜູ້ຮັບເໝົາໂຄງການ ມີສິດ ແລະໜ້າທີ່ ດັ່ງນີ້:

1. ປະຕິບັດໂຄງການໃຫ້ສຳເລັດ ຕາມມາດຕະຖານເຕັກນິກ ແລະ ກຳນົດເວລາ ທີ່ໄດ້ບົ່ງໄວ້ໃນສັນຍາ;
2. ຮັບເງິນຄ່າໂຄງການທີ່ຕົນໄດ້ປະຕິບັດສຳເລັດຈາກເຈົ້າຂອງໂຄງການ ຕາມສັນຍາ;
3. ປະຕິເສດຄຳແນະນຳຂອງເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ ຫຼື ທີ່ປຶກສາໂຄງການ ທີ່ບໍ່ຖືກກັບມາດຕະຖານເຕັກນິກ ຊຶ່ງຈະເຮັດໃຫ້ໂຄງການນັ້ນບໍ່ມີຄຸນນະພາບ;
4. ປົກປັກຮັກສາ ພາຫະນະ, ວັດຖຸອຸປະກອນ ແລະວັດສະດຸກໍ່ສ້າງຕ່າງໆຂອງໂຄງການ ທີ່ເຈົ້າຂອງໂຄງການຈັດຫາໃຫ້;
5. ຄໍ້າປະກັນໂຄງການຢ່າງໜ້ອຍ 10% ຂອງມູນຄ່າໂຄງການ ແລະປະຕິບັດເວລາຄໍ້າປະກັນໂຄງການຕາມສັນຍາ;
6. ກໍ່ສ້າງ ຫຼື ສ້ອມແປງໂຄງການຄືນໃໝ່ດ້ວຍທຶນຂອງຕົນເອງ ໃນກໍລະນີທີ່ໂຄງການນັ້ນຫາກເປ່ເພ ຫຼື ບໍ່ໄດ້ມາດຕະຖານເຕັກນິກໃນໄລຍະເວລາຄໍ້າປະກັນ;
7. ຖອນເງິນຄໍ້າປະກັນໂຄງການດັ່ງກ່າວ ພາຍຫລັງທີ່ສິ້ນສຸດໄລຍະເວລາຄໍ້າປະກັນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ຕາມກົດໝາຍ;
8. ຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເກີດຂຶ້ນເນື່ອງຈາກໂຄງການທີ່ຕົນສ້າງນັ້ນ ບໍ່ໄດ້ຕາມມາດຕະຖານເຕັກນິກ ເວັ້ນເສັຍແຕ່ຄວາມເສັຍຫາຍນັ້ນຫາກເກີດຂຶ້ນຍ້ອນເຫດສຸດວິໄສ;
9. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 6
## ການລາຍງານການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ

### ມາດຕາ 51 . ອົງການຮັບຜິດຊອບລາຍງານການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ

ອົງການຮັບຜິດຊອບລາຍງານການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ມີ ດັ່ງນີ້:

1. ລັດຖະບານ;
2. ກະຊວງແຜນການ ແລະການລົງທຶນ;
3. ກະຊວງການເງິນ;
4. ບັນດາກະຊວງ ແລະອົງການ;
5. ອົງການປົກຄອງທ້ອງຖິ່ນ.

### ມາດຕາ 52. ລັດຖະບານ

ລັດຖະບານ ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະແຜນການລົງທຶນຂອງລັດ ຕໍ່ກອງປະຊຸມສະພາແຫ່ງຊາດ.

### ມາດຕາ 53. ກະຊວງແຜນການ ແລະການລົງທຶນ

ກະຊວງແຜນການ ແລະການລົງທຶນ ສະຫລຸບ, ສັງລວມ, ຕີລາຄາ ແລະ ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດ ໃຫ້ລັດຖະບານຢ່າງເປັນປົກກະຕິ.

### ມາດຕາ 54. ກະຊວງການເງິນ

ກະຊວງການເງິນ ສະຫລຸບ, ສັງລວມ ສະພາບການຈັດຕັ້ງປະຕິບັດແຜນການນຳໃຊ້ງົບປະມານເຂົ້າໃນການລົງທຶນຂອງລັດ ເປັນແຕ່ລະງວດ ແລ້ວສົ່ງເຖິງກະຊວງແຜນການ ແລະ ການລົງທຶນ ກ່ອນວັນທີ 10 ຂອງເດືອນທ້າຍງວດ ພ້ອມທັງລາຍງານໃຫ້ລັດຖະບານຢ່າງເປັນປົກກະຕິ.

### ມາດຕາ 55. ບັນດາກະຊວງ ແລະອົງການ

ບັນດາກະຊວງ ແລະອົງການ ສະຫຼຸບ, ສັງລວມ ແລະລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນການລົງທຶນຂອງລັດໃນຂອບເຂດທີ່ຕົນຮັບຜິດຊອບ ເປັນແຕ່ລະງວດ ແລ້ວສົ່ງເຖິງກະຊວງແຜນການ ແລະການລົງທຶນ ກ່ອນວັນທີ 10 ຂອງເດືອນທ້າຍງວດຢ່າງເປັນປົກກະຕິ.

### ມາດຕາ 56. ອົງການປົກຄອງທ້ອງຖິ່ນ

ອົງການປົກຄອງທ້ອງຖິ່ນ ສະຫຼຸບ, ສັງລວມ ແລະລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນການລົງທຶນຂອງລັດ ໃນຂອບເຂດທີ່ຕົນຮັບຜິດຊອບ ໃຫ້ກະຊວງແຜນການ ແລະການລົງທຶນ, ບັນດາກະຊວງ, ອົງການ ເປັນແຕ່ລະງວດຢ່າງເປັນປົກກະຕິ ພາຍຫຼັງທີ່ໄດ້ປະສານສົມທົບກັບຂະແໜງການຂັ້ນຂອງຕົນ ພ້ອມກັບຜົນຂອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ບັນດາກະຊວງ, ອົງການ ໄດ້ມອບໝາຍໃຫ້.

## ໝວດທີ 7
## ການມອບຮັບ ແລະນຳໃຊ້ໂຄງການລົງທຶນຂອງລັດ

### ມາດຕາ 57. ການມອບຮັບໂຄງການ

ເມື່ອໂຄງການປະຕິບັດສຳເລັດແລ້ວ ກ່ອນການມອບຮັບຢ່າງເປັນທາງການນັ້ນ ຕ້ອງໄດ້ມີການກວດກາທາງດ້ານມາດຕະຖານເຕັກນິກ, ປະລິມານ, ຄຸນນະພາບ ທີ່ໄດ້ກຳນົດໄວ້ໃນເອກະສານໂຄງການ ແລະສັນຍາ ພ້ອມທັງດຳເນີນການປະເມີນຜົນໂຄງການ, ແນະນຳການນຳໃຊ້ ຫຼື ມີການທົດລອງນຳໃຊ້ໃນໄລຍະໜຶ່ງ ສຳລັບບາງໂຄງການ.

### ມາດຕາ 58. ການຊຳລະມູນຄ່າໂຄງການລົງທຶນຂອງລັດ

ພາຍຫລັງທີ່ໂຄງການໄດ້ປະຕິບັດສຳເລັດ, ມີການກວດກາຢັ້ງຢືນທາງດ້ານມາດຕະຖານເຕັກນິກ ແລະຄຸນນະພາບຂອງໂຄງການຄົບຖ້ວນແລ້ວ ຕ້ອງຊຳລະມູນຄ່າໂຄງການນັ້ນ ຕາມສັນຍາ ແລະ ລະບຽບການເບີກຈ່າຍ.

### ມາດຕາ 59. ການນຳໃຊ້ໂຄງການ ແລະການປະເມີນຜົນຫລັງການນຳໃຊ້

ການນຳໃຊ້ໂຄງການ ຕ້ອງໃຫ້ສອດຄ່ອງກັບວັດຖຸປະສົງຂອງການລົງທຶນຂອງລັດ ແລະຄຸນປະໂຫຍດຂອງໂຄງການນັ້ນ. ເຈົ້າຂອງໂຄງການ ຕ້ອງແຕ່ງຕັ້ງຜູ້ຄຸ້ມຄອງ ແລະນຳໃຊ້ໂຄງການດັ່ງກ່າວ ໃຫ້ມີປະສິດທິຜົນ.

ໂຄງການລົງທຶນຂອງລັດ ເປັນກຳມະສິດຂອງລັດ ຊຶ່ງລັດຖະບານສາມາດຫັນການຄຸ້ມຄອງ ແລະນຳໃຊ້ໃຫ້ບຸກຄົນ ຫຼື ນິຕິບຸກຄົນໃນຮູບແບບ ການຂາຍ, ແລກປ່ຽນ, ໃຫ້ເຊົ່າ, ສຳປະທານ ຊຶ່ງໄດ້ກຳນົດໄວ້ໃນລະບຽບການສະເພາະ.

ສຳລັບໂຄງການປະເພດ I ແລະປະເພດ II ພາຍຫລັງນຳໃຊ້ໄດ້ ສອງ ຫາ ຫ້າປີ ຕ້ອງໄດ້ປະເມີນຜົນ ເພື່ອຖອດຖອນບົດຮຽນ ແລະປັບປຸງການສ້າງໂຄງການລົງທຶນຂອງລັດໃນອະນາຄົດ.

ເນື້ອໃນການປະເມີນຜົນ ໃຫ້ປະຕິບັດຕາມມາດຕາ 40 ຂອງກົດໝາຍສະບັບນີ້.

### ມາດຕາ 60. ການບູລະນະຮັກສາໂຄງການ

ການບູລະນະຮັກສາໂຄງການລົງທຶນຂອງລັດ ແມ່ນ ພັນທະ ຂອງທົ່ວສັງຄົມ, ຂອງຜູ້ຄຸ້ມຄອງ ແລະນຳໃຊ້ໂຄງການໃນການປົກປັກຮັກສາໂຄງການນັ້ນໃຫ້ຍືນຍົງ ແລະຮັບໃຊ້ຜົນປະໂຫຍດລວມຢ່າງຍາວນານ.

## ພາກທີ III
## ຂໍ້ຫ້າມ

### ມາດຕາ 61. ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ ແລະການຈັດຕັ້ງ ມີການກະທຳຕົ້ນຕໍ ດັ່ງນີ້:

1. ປະຕິບັດໂຄງການລົງທຶນນອກແຜນ ແລະເກີນແຜນທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ. ເວັ້ນເສັຍແຕ່ກໍລະນີເຫດສຸດວິໄສ ແຕ່ຕ້ອງໄດ້ສະເໜີລັດຖະບານພິຈາລະນາ ເພື່ອຂໍອະນຸມັດຈາກສະພາແຫ່ງຊາດ;
2. ສ້າງໂຄງການລົງທຶນເກີນອາຍຸ ທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍສະບັບນີ້;
3. ເອົາໂຄງການລົງທຶນຂອງລັດທີ່ບໍ່ໄດ້ຜ່ານການປະເມີນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້ ເຂົ້າໃນແຜນການລົງທຶນຂອງລັດ ເດັດຂາດ;
4. ດຳເນີນການປະມູນໂຄງການລົງທຶນຂອງລັດທີ່ຂັດກັບລະບຽບການ;
5. ບັນຈຸໂຄງການລົງທຶນທີ່ຍັງບໍ່ທັນມີການຢັ້ງຢືນແຫຼ່ງທຶນຊ່ວຍເຫຼືອລ້າຢ່າງແນ່ນອນ ເຂົ້າໃນແຜນການລົງທຶນຂອງລັດ;
6. ຮັບ ແລະໃຫ້ສິນບົນ, ບັງຄັບ ນາບຂູ່, ຕົວະຍົວະ ຫຼອກລວງ, ແອບອ້າງຊື່ຂອງຜູ້ມີສິດອຳນາດໃນ ການເຄື່ອນໄຫວລົງທຶນຂອງລັດ ເພື່ອຜົນປະໂຫຍດສ່ວນຕົວ ເປັນຕົ້ນ ການປະມູນໂຄງການ;
7. ເຂົ້າແຊກແຊງໃນຂະບວນການລົງທຶນຂອງລັດ ຊຶ່ງຕົນບໍ່ມີຄວາມຮັບຜິດຊອບໂດຍກົງ ຕໍ່ການຄຸ້ມຄອງໂຄງການລົງທຶນຂອງລັດ.

## ມາດຕາ 62. ຂໍ້ຫ້າມສຳລັບເຈົ້າຂອງໂຄງການ

ຫ້າມເຈົ້າຂອງໂຄງການ ມີການກະທຳຕົ້ນຕໍ ດັ່ງນີ້:

1. ຕົກລົງຮັບຮອງເອົາໂຄງການລົງທຶນທີ່ບໍ່ມີປະສິດທິຜົນ ແລະ ອາດກໍ່ໃຫ້ເກີດຄວາມເສຍຫາຍແກ່ ລັດ, ລວມໝູ່ ແລະບຸກຄົນ;
2. ອວ່າຍທຶນຈາກໂຄງການລົງທຶນຂອງລັດ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວໄປໃສ່ໂຄງການນອກແຜນ;
3. ເພີ່ມບໍລິມາດວຽກຂອງໂຄງການໂດຍພາລະການ;
4. ອະນຸຍາດໃຫ້ທີ່ປຶກສາ ແລະຜູ້ຮັບເໝົາໂຄງການ ດັດແປງບັນດາມາດຕະຖານເຕັກນິກໂຄງການ ໂດຍບໍ່ໄດ້ຮັບການເຫັນດີຈາກອົງການວິຊາການທີ່ກ່ຽວຂ້ອງ;
5. ຮັບສິນບົນ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ແກ້ໄຂບັນຫາຕ່າງໆທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ.

## ມາດຕາ 63. ຂໍ້ຫ້າມສຳລັບຄະນະຮັບຜິດຊອບໂຄງການ

ຫ້າມຄະນະຮັບຜິດຊອບໂຄງການ ມີການກະທຳຕົ້ນຕໍ ດັ່ງນີ້:

1. ກົດໜ່ວງ ແກ່ຍາວການປະຕິບັດໂຄງການ ຊຶ່ງຈະສົ່ງຜົນສະທ້ອນຕໍ່ຄຸນນະພາບຂອງໂຄງການ ແລະເຮັດໃຫ້ລາຍຈ່າຍການລົງທຶນເພີ່ມຂຶ້ນໂດຍບໍ່ມີເຫດຜົນ;
2. ຮັບສິນບົນ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ແກ້ໄຂບັນຫາຕ່າງໆ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ;
3. ນຳໃຊ້ສິດຂອງຕົນເກີນຂອບເຂດໃນການປະຕິບັດໜ້າທີ່.

## ມາດຕາ 64. ຂໍ້ຫ້າມສຳລັບຜູ້ຄຸ້ມຄອງ ແລະນຳໃຊ້ໂຄງການ

ຫ້າມຜູ້ຄຸ້ມຄອງ ແລະນຳໃຊ້ໂຄງການ ມີການກະທຳຕົ້ນຕໍ ດັ່ງນີ້:

1. ປ່ຽນເປົ້າໝາຍການນຳໃຊ້ໂຄງການໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ;
2. ນຳເອົາຊັບສິນຂອງໂຄງການ ໄປຂາຍ, ຊວດຈຳ, ຄ້ຳປະກັນ ຫຼື ດຳເນີນການໃດໜຶ່ງທີ່ຂັດກັບລະບຽບການຄຸ້ມຄອງຊັບສິນຂອງລັດ.

## ມາດຕາ 65. ຂໍ້ຫ້າມສຳລັບທີ່ປຶກສາ ແລະຜູ້ຮັບເໜົາໂຄງການ

ຫ້າມທີ່ປຶກສາ ແລະຜູ້ຮັບເໜົາໂຄງການ ມີການກະທຳຕົ້ນຕໍ ດັ່ງນີ້:

1. ຫລົບຫລີກໃນການໃຫ້ຄຳປຶກສາ ຫຼື ຄຳແນະນຳທາງດ້ານວິຊາການ, ບໍລິຫານໂຄງການລົງທຶນຂອງລັດ;
2. ໃຫ້ຄຳປຶກສາທີ່ບິດເບືອນ, ບໍ່ຖືກຕ້ອງຕາມຄວາມຈິງ;
3. ເມີນເສີຍໃນການຄຸ້ມຄອງການປະຕິບັດໂຄງການລົງທຶນຂອງລັດ;
4. ດັດແປງບັນດາມາດຕະຖານເຕັກນິກໂຄງການ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ;

5. ສົມຮູ້ຮ່ວມຄິດກັບເຈົ້າຂອງໂຄງການ ຫຼື ຄະນະຮັບຜິດຊອບໂຄງການ ຫຼື ຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງການ ເພື່ອຫາຜົນປະໂຫຍດທີ່ບໍ່ຊອບທຳ;
6. ສະໜອງຂໍ້ມູນທາງດ້ານການເງິນ ແລະເຕັກນິກ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ;
7. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງໂຄງການ ຕໍ່ບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ມີສ່ວນກ່ຽວຂ້ອງ;
8. ຂາຍໂຄງການທີ່ຕົນປະມູນໄດ້ໃຫ້ຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ.

# ພາກທີ IV
# ການແກ້ໄຂຂໍ້ຂັດແຍ່ງ

## ມາດຕາ 66. ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຂອງລັດ ດຳເນີນດ້ວຍຮູບການ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂທາງບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ.

## ມາດຕາ 67. ການປະນີປະນອມ ຫຼື ການໄກ່ເກ່ຍ

ຖ້າຂໍ້ຂັດແຍ່ງຫາກເກີດຂຶ້ນ ຊຶ່ງມີສ່ວນພົວພັນກັບການລົງທຶນຂອງລັດແລ້ວ ຄູ່ກໍລະນີ ຕ້ອງພະຍາຍາມແກ້ໄຂຂໍ້ຂັດແຍ່ງນັ້ນ ດ້ວຍການປຶກສາຫາລື ແລະປະນີປະນອມກັນ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດນຳກັນ.

## ມາດຕາ 68. ການແກ້ໄຂທາງບໍລິຫານ

ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະບໍລິຫານກ່ຽວກັບການລົງທຶນຂອງລັດ ເຊັ່ນ ບຸກຄົນ ແລະນິຕິບຸກຄົນ ທີ່ເຄື່ອນໄຫວລົງທຶນໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖືກຕ້ອງຕາມເປົ້າໝາຍນັ້ນ ໃຫ້ຂະແໜງການແຜນການ ແລະການລົງທຶນ ປະສານສົມທົບກັບຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນຂັ້ນຂອງຕົນເປັນຜູ້ແກ້ໄຂ. ໃນກໍລະນີຫາກບໍ່ສາມາດແກ້ໄຂໄດ້ນັ້ນ ກໍມີສິດສະເໜີຕໍ່ອົງການຂັ້ນເທິງຖັດຕົນ ເປັນຜູ້ແກ້ໄຂ.

## ມາດຕາ 69. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ເມື່ອຄູ່ກໍລະນີບໍ່ສາມາດປະນີປະນອມກັນ ຫຼື ໄກ່ເກ່ຍກັນຢູ່ຂະແໜງການແຜນການ ແລະການລົງທຶນໄດ້ ກໍມີສິດຮ້ອງຂໍໃຫ້ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແກ້ໄຂ ຕາມລະບຽບກົດໝາຍ ບົນພື້ນຖານການຕົກລົງເຫັນດີນຳກັນ.

**ມາດຕາ 70. ການຮ້ອງຟ້ອງຕໍ່ສານປະຊາຊົນ**

ເມື່ອຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫາກເຫັນວ່າຕົນບໍ່ໄດ້ຮັບຄວາມຍຸຕິທຳ ຫຼື ໄດ້ຮັບຄວາມເສັຍຫາຍ ເນື່ອງຈາກການລົງທຶນຂອງລັດໃນໂຄງການໃດໜຶ່ງແລ້ວ ກໍມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອທຳການພິຈາລະນາຕັດສິນ ຕາມລະບຽບກົດໝາຍ.

**ມາດຕາ 71. ຄວາມຮັບຜິດຊອບໃນໄລຍະລໍຖ້າການແກ້ໄຂ**

ໃນໄລຍະລໍຖ້າການແກ້ໄຂຂໍ້ຂັດແຍ່ງນັ້ນ ບັນດາການຈັດຕັ້ງ, ບຸກຄົນທີ່ກ່ຽວຂ້ອງກັບການເຄື່ອນໄຫວການລົງທຶນຂອງລັດ ຕ້ອງສືບຕໍ່ປະຕິບັດໜ້າທີ່ຂອງຕົນຕາມການຕົກລົງຂອງຂະແໜງການ ຫຼື ອົງການທີ່ກ່ຽວຂ້ອງກັບການລົງທຶນຂອງລັດ.

# ພາກທີ V
# ການຄຸ້ມຄອງ ແລະກວດກາ

## ໝວດທີ 1
## ການຄຸ້ມຄອງການລົງທຶນຂອງລັດ

**ມາດຕາ 72. ອົງການຄຸ້ມຄອງ**

ລັດຖະບານ ຄຸ້ມຄອງວຽກງານການລົງທຶນຂອງລັດ ຢ່າງລວມສູນ ແລະເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການໃນການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນ.

ອົງການຄຸ້ມຄອງວຽກງານການລົງທຶນຂອງລັດ ປະກອບດ້ວຍ:

1. ກະຊວງແຜນການ ແລະການລົງທຶນ;
2. ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນ;
3. ຫ້ອງການແຜນການ, ຫ້ອງການແຜນການ-ການເງິນ ເມືອງ, ເທດສະບານ;
4. ອົງການປົກຄອງບ້ານ.

**ມາດຕາ 73. ສິດ ແລະ ໜ້າທີ່ຂອງກະຊວງແຜນການ ແລະການລົງທຶນ**

ໃນການຄຸ້ມຄອງວຽກງານການລົງທຶນຂອງລັດ ກະຊວງແຜນການ ແລະການລົງທຶນ ມີສິດ ແລະໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ລັດຖະບານ ໃນການຜັນຂະຫຍາຍ ແນວທາງ, ແຜນຍຸດທະສາດ, ແຜນນະໂຍບາຍ ແລະ ນະໂຍບາຍຕ່າງໆ ກ່ຽວກັບການລົງທຶນຂອງລັດ ໃຫ້ກາຍເປັນແຜນການ, ແຜນງານ, ໂຄງການລະອຽດ ແລະ ສ້າງລະບຽບກົດໝາຍ;
2. ໂຄສະນາ ເຜີຍແຜ່, ຊີ້ນຳ, ຕິດຕາມ ການຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການລົງທຶນຂອງລັດ ແລະລະບຽບກົດໝາຍກ່ຽວກັບການລົງທຶນຂອງລັດ;

3. ຄົ້ນຄວ້າ, ວິໄຈຂໍ້ມູນຂ່າວສານ ເພື່ອສະໜອງໃຫ້ແກ່ການຕັດສິນໃຈໃນການລົງທຶນຂອງລັດ;
4. ກໍ່ສ້າງ, ບຳລຸງ, ຍົກລະດັບພະນັກງານຄຸ້ມຄອງການລົງທຶນຂອງລັດ;
5. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ;
6. ພົວພັນຮ່ວມມືກັບຕ່າງປະເທດ ເພື່ອຍາດແຍ່ງການຊ່ວຍເຫລືອ;
7. ສະຫລຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຫຼື ຕາມການມອບໝາຍ ຂອງລັດຖະບານ.

## ມາດຕາ 74. ສິດ ແລະໜ້າທີ່ຂອງພະແນກແຜນການ ແລະການລົງທຶນແຂວງ, ນະຄອນ

ໃນການຄຸ້ມຄອງວຽກງານການລົງທຶນຂອງລັດ ພະແນກແຜນການ ແລະການລົງທຶນແຂວງ, ນະຄອນ ມີ ສິດ ແລະໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ມະຕິ, ຄຳສັ່ງ ແລະລະບຽບການ ກ່ຽວກັບການຄຸ້ມຄອງການລົງທຶນຂອງລັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນແຜນການ ແລະແຜນງານລະອຽດ ເພື່ອຈັດຕັ້ງປະຕິບັດ;
2. ໂຄສະນາ ເຜີຍແຜ່ລະບຽບກົດໝາຍ ກ່ຽວກັບການລົງທຶນຂອງລັດ ຕາມການມອບໝາຍ;
3. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະປະເມີນຜົນການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ພ້ອມທັງ ເຂົ້າຮ່ວມການປະມູນໂຄງການລົງທຶນ ທີ່ຕັ້ງຢູ່ແຂວງ, ນະຄອນ;
4. ເປັນເສນາທິການໃນການຄົ້ນຄວ້າ ມີຄຳເຫັນກ່ຽວກັບການລົງທຶນຂອງລັດໃນໂຄງການຕ່າງໆ ເພື່ອໃຫ້ອົງການປົກຄອງແຂວງ, ນະຄອນ ຫຼື ກະຊວງແຜນການ ແລະການລົງທຶນ ພິຈາລະນາ ຕາມແຕ່ລະກໍລະນີ;
5. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງຢູ່ພາຍໃນແຂວງ, ນະຄອນ ເພື່ອຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ;
6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບຫມາຍຂອງກະຊວງແຜນການ ແລະການລົງທຶນ, ອົງການປົກຄອງແຂວງ, ນະຄອນ;
7. ສະຫລຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ພາຍໃນແຂວງ, ນະຄອນ ໃຫ້ກະຊວງແຜນການ ແລະການລົງທຶນ, ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ຫນ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງກະຊວງແຜນການ ແລະການລົງທຶນ.

## ມາດຕາ 75. ສິດ ແລະໜ້າທີ່ຂອງຫ້ອງການແຜນການ, ຫ້ອງການແຜນການ-ການເງິນ ເມືອງ, ເທດສະບານ

ໃນການຄຸ້ມຄອງວຽກງານການລົງທຶນຂອງລັດ ຫ້ອງການແຜນການ, ຫ້ອງການແຜນການ-ການເງິນ ເມືອງ, ເທດສະບານ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດບັນດາແຜນການ, ແຜນງານ, ໂຄງການ, ຂໍ້ຕົກລົງ, ຄໍາສັ່ງ, ແຈ້ງການ ແລະ ຄໍາແນະນໍາ ກ່ຽວກັບການລົງທຶນຂອງລັດ;
2. ເຜີຍແຜ່ລະບຽບກົດໝາຍກ່ຽວກັບການລົງທຶນຂອງລັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຊຸກຍູ້, ຕິດຕາມການປະຕິບັດວຽກງານ ກ່ຽວກັບການລົງທຶນຂອງລັດ ໃນຂອບເຂດທ້ອງຖິ່ນຕົນ;
4. ປຸກລະດົມປະຊາຊົນ ເພື່ອຄຸ້ມຄອງ, ປົກປັກຮັກສາ ແລະນໍາໃຊ້ໂຄງການລົງທຶນຂອງລັດ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະຍືນຍົງ;
5. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດການລົງທຶນຂອງລັດ ພາຍໃນເມືອງ, ເທດສະບານ ໃຫ້ພະແນກແຜນການ ແລະການລົງທຶນແຂວງ, ນະຄອນ ແລະອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;
6. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ແລະຕາມການມອບໝາຍຂອງຂັ້ນເທິງ.

## ມາດຕາ 76. ສິດ ແລະໜ້າທີ່ຂອງອົງການປົກຄອງບ້ານ

ໃນການຄຸ້ມຄອງວຽກງານການລົງທຶນຂອງລັດ ອົງການປົກຄອງບ້ານ ມີສິດ ແລະໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມຕິດຕາມ, ອໍານວຍຄວາມສະດວກ ໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ໃນຂອບເຂດພື້ນທີ່ຕົນຮັບຜິດຊອບ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ;
2. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ມາດຕາ 77. ຄວາມຮັບຜິດຊອບຂອງຂະແໜງການ ແລະພາກສ່ວນອື່ນ

ບັນດາຂະແໜງການ ແລະພາກສ່ວນອື່ນ ທີ່ກ່ຽວຂ້ອງກັບການຄຸ້ມຄອງວຽກງານການລົງທຶນຂອງລັດ ນອກຈາກປະຕິບັດຕາມກົດໝາຍສະບັບນີ້ແລ້ວ ຍັງປະຕິບັດຕາມພາລະບົດບາດ, ສິດ ແລະໜ້າທີ່ຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2
## ການກວດກາການລົງທຶນຂອງລັດ

### ມາດຕາ 78. ອົງການກວດກາ

ອົງການກວດກາວຽກງານການລົງທຶນຂອງລັດ ມີ ສອງພາກສ່ວນ ຄື:

1. ອົງການກວດກາພາຍໃນ ຊຶ່ງປະກອບດ້ວຍ ຂະແໜງການແຜນການ ແລະ ການລົງທຶນ, ການເງິນ ແລະ ຂະແໜງການວິຊາການອື່ນ ທີ່ກ່ຽວຂ້ອງ;
2. ອົງການກວດກາພາຍນອກ ຊຶ່ງປະກອບດ້ວຍ ສະພາແຫ່ງຊາດ, ອົງການກວດສອບແຫ່ງລັດ, ອົງການກວດກາລັດ, ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ປະຊາຊົນ.

### ມາດຕາ 79. ສິດ ແລະໜ້າທີ່ຂອງອົງການກວດກາພາຍໃນ

ອົງການກວດກາພາຍໃນ ມີສິດ ແລະໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຂະແໜງການແຜນການ ແລະການລົງທຶນ ກວດກາບັນດາໂຄງການທີ່ໄດ້ຮັບອະນຸມັດແລ້ວນັ້ນ ໄດ້ຈັດຕັ້ງປະຕິບັດຖືກກັບເປົ້າໝາຍ, ລະບຽບການ ແລະບົດວິພາກເສດຖະກິດ ຫຼື ບົດພັດທະນາໂຄງການ;
2. ຂະແໜງການການເງິນ ກວດກາການສະໜອງ ແລະນຳໃຊ້ງົບປະມານ ໃນໂຄງການລົງທຶນຂອງລັດ;
3. ຂະແໜງການວິຊາການອື່ນ ກວດກາທາງດ້ານມາດຕະຖານເຕັກນິກ, ເຕັກໂນໂລຊີ, ສິ່ງແວດລ້ອມ, ຄຸນນະພາບ, ຄວາມປອດໄພ, ການນຳໃຊ້ວັດຖຸອຸປະກອນ.

### ມາດຕາ 80. ສິດ ແລະໜ້າທີ່ຂອງອົງການກວດກາພາຍນອກ

ອົງການກວດກາພາຍນອກ ມີສິດ ແລະໜ້າທີ່ຕົ້ນຕໍ ດັ່ງນີ້:

1. ສະພາແຫ່ງຊາດ ກວດກາການຈັດຕັ້ງປະຕິບັດແຜນການ ແລະໂຄງການລົງທຶນຂອງລັດທຸກປະເພດ ລວມທັງໂຄງການທີ່ພົວພັນກັບຫລາຍຂະແໜງການ ແລະທ້ອງຖິ່ນ;
2. ອົງການກວດສອບແຫ່ງລັດ ກວດກາການນຳໃຊ້ງົບປະມານ, ຄວາມໂປ່ງໃສໃນການເບີກຈ່າຍງົບປະມານ ໃນການປະຕິບັດໂຄງການລົງທຶນຂອງລັດ;
3. ອົງການກວດກາລັດ ກວດກາຄວາມໂປ່ງໃສໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ;
4. ອົງການປົກຄອງທ້ອງຖິ່ນ ກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ຢູ່ໃນຂອບເຂດທີ່ຕົນຮັບຜິດຊອບ, ເຂົ້າຮ່ວມການກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຂອງບັນດາກະຊວງ, ອົງການ ຢູ່ທ້ອງຖິ່ນຕົນ;

5. ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ເຂົ້າຮ່ວມໃນການກວດກາການປະຕິບັດໂຄງການລົງທຶນຂອງລັດ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ແລະປະຊາຊົນ;
6. ປະຊາຊົນ ຕິດຕາມ, ລາຍງານ ການປະຕິບັດໂຄງການລົງທຶນຂອງລັດ ທີ່ບໍ່ຖືກຕ້ອງ ຊຶ່ງຈະສ້າງຄວາມເສັຍຫາຍແກ່ສາທາລະນະ ຫຼື ຜົນປະໂຫຍດລວມຂອງຊາດ.

### ມາດຕາ 81. ຮູບການການກວດກາ

ຮູບການການກວດກາ ມີ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ມີລັກສະນະເປັນປະຈຳ ແລະມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍໜຶ່ງເທື່ອຕໍ່ປີ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາເມື່ອຫາກເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ອົງການທີ່ຮັບຜິດຊອບໃນການສ້າງ, ການຄຸ້ມຄອງໂຄງການລົງທຶນຂອງລັດ ຫຼື ຜູ້ດຳເນີນກິດຈະການລົງທຶນຂອງລັດ ຮູ້ລ່ວງໜ້າ ຢ່າງໜ້ອຍຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາເມື່ອຫາກເຫັນວ່າມີຄວາມຈຳເປັນ ແຕ່ການຕົກລົງກວດການັ້ນ ແມ່ນ ດຳເນີນຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ອົງການທີ່ຮັບຜິດຊອບໃນການສ້າງ, ການຄຸ້ມຄອງໂຄງການລົງທຶນຂອງລັດ ຫຼື ຜູ້ດຳເນີນກິດຈະການລົງທຶນຂອງລັດ ຮູ້ລ່ວງໜ້າ.

ການກວດກາ ໃຫ້ດຳເນີນທັງການກວດກາເອກະສານ, ກວດກາດ້ານເຕັກນິກ ແລະລົງກວດກາການປະຕິບັດຕົວຈິງຂອງການຈັດຕັ້ງ ແລະບຸກຄົນ ຢູ່ສະຖານທີ່ປະຕິບັດງານ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 82. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ສຳເລັດຕາມກຳນົດເວລາ, ປະຢັດລາຍຈ່າຍ, ຄຸ້ມຄອງທຶນບໍ່ຮົ່ວໄຫຼ, ມີປະສິດທິຜົນສູງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 83. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການຕ່າງໆ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ເຊັ່ນ ສຶກສາອົບຮົມ, ປັບໃໝ, ປະຕິບັດວິໄນ ແລະລົງໂທດທາງອາຍາ ພ້ອມທັງໃຊ້ແທນຄ່າເສຍຫາຍ.

### ມາດຕາ 84. ມາດຕະການສຶກສາອົບຮົມ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ລະເມີດ ເປັນຕົ້ນ ບັນດາຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຊຶ່ງເປັນການກໍ່ຄວາມເສັຍຫາຍບໍ່ຫຼວງຫຼາຍ ແລະ ບໍ່ເປັນການກະທຳຜິດທາງອາຍາ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ.

### ມາດຕາ 85. ມາດຕະການປັບໃໝ

ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຜ່ານການກ່າວເຕືອນ ແລະສຶກສາອົບຮົມແລ້ວ ແຕ່ຫາກບໍ່ເຂັດຫຼາບ, ກໍ່ຄວາມເສຍຫາຍ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝຕາມລະບຽບການສະເພາະ.

### ມາດຕາ 86. ມາດຕະການທາງວິໄນ

ພະນັກງານ ຫຼື ເຈົ້າໜ້າທີ່ ທີ່ໄດ້ລະເມີດລະບຽບກົດໝາຍກ່ຽວກັບການລົງທຶນຂອງລັດ ໂດຍເຈດຕະນາ ແຕ່ບໍ່ສ້າງຄວາມເສັຍຫາຍຢ່າງຫຼວງຫຼາຍ ຈະຖືກປະຕິບັດວິໄນ ເປັນຕົ້ນ ການໂຈະການປະຕິບັດໜ້າທີ່ຊົ່ວຄາວ, ສັບປ່ຽນໜ້າທີ່ ຫຼື ປົດຕຳແໜ່ງ ແລະອື່ນໆ ຕາມລະບຽບການ.

### ມາດຕາ 87. ມາດຕະການທາງແພ່ງ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ກໍ່ຄວາມເສັຍຫາຍໃຫ້ແກ່ຜູ້ອື່ນເນື່ອງຈາກການລົງທຶນ ຈະຕ້ອງໃຊ້ແທນຄ່າເສັຍຫາຍທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

### ມາດຕາ 88. ມາດຕະການທາງອາຍາ

ບຸກຄົນ ທີ່ໄດ້ລະເມີດລະບຽບກົດໝາຍກ່ຽວກັບການລົງທຶນຂອງລັດ ແລະບັນດາ ຂໍ້ຫ້າມ ຊຶ່ງເປັນການກະທຳຜິດທາງອາຍາ ແລະກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ສຸຂະພາບ, ຊີວິດ, ຊັບສິນ ແລະຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນອື່ນ ຈະຖືກດຳເນີນຄະດີອາຍາ ແລະໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

# ພາກທີ VII
# ບົດບັນຍັດສຸດທ້າຍ

### ມາດຕາ 89. ການຈັດຕັ້ງປະຕິບັດ

ລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 90. ຜົນສັກສິດ

ກົດໝາຍສະບັບນີ້ມີຜົນສັກສິດ ພາຍຫຼັງຫົກສິບວັນ ນັບແຕ່ວັນປະທານປະເທດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**